ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0880/ຜ-ຜຟລ

ນະຄອນຫຼວງວຽງຈັນ, ວັນທີ 05 ເມສາ 2024

ໜັງສືແຈ້ງເຊີນ

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023

- ອີງຕາມ ມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝວິສາມັນຄັ້ງທີ 1/2024 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 13 ກຸມພາ 2024.
- ອີງຕາມ ມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ 1/2024 ຂອງ ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ, ວັນທີ 15 ມີນາ 2024.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງໃຫ້ທ່ານ ເພື່ອເຂົ້າຮ່ວມກອງປະຊຸມ ສາມັນຜູ້ຖືຮຸ້ນປະຈຳປີ 2023 ໃນວັນທີ **26 ເມສາ 2024** ເວລາ **15:00** ໂມງ. ເຊິ່ງກອງປະຊຸມດັ່ງກ່າວ ຈະໄດ້ຈັດຂຶ້ນ ເປັນ 02 ລະບົບຄື: ລະບົບແບບຊ້ອງໜ້າທີ່ຫ້ອງປະຊຸມໃຫຍ່ຊັ້ນ 01 ລັດວິສາຫະກິດໄຟຟ້າລາວ ແລະ ຜ່ານລະບົບແບບ ອອນລາຍ.

ຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມແບບອອນລາຍ (ລາຍລະອຽດໃນເອກະສານຄັດຕິດທີ 8) ແລະ ສຳລັບຜູ້ຖື ຮຸ້ນທີ່ຈະເຂົ້າປະຊຸມແບບຊ້ອງໜ້າແມ່ນ (ເລີ່ມລົງທະບຽນເວລາ **13:30** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານ ໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງ ວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ **2023** ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ກຳນົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖື ຮຸ້ນປະຈຳປີ 2023, ໃນວັນທີ **11 ມີນາ 2024**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈຸມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ ປ.ນ. 2392, ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌:www.edlgen.com.la

<u>ເອກະສານຄັດຕິດ:</u>

1. ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023.
2. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023.
3. ລາຍງານການເງິນປະຈຳປີ 2023.
4. ຊີວະປະຫວັດຫຍໍ້ ຂອງຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່.
5. ຊີວະປະຫວັດຫຍໍ້ ຂອງຄະນະສະພາບໍລິຫານຜູ້ໃໝ່.
6. ໃບມອບສັນທະ.
7. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
8. ຄຳແນະນຳຂັ້ນຕອນການເຂົ້າກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ຜ່ານລະບົບອອນລາຍ ແລະ ໃຫ້ລົງທະບຽນ ພາຍໃນວັນທີ 24 ເມສາ 2024.
9. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023.

<u>ໝາຍເຫດ</u>:

1. ເພື່ອເປັນການອຳນວຍຄວາມສະດວກໃຫ້ກັບບັນດາທ່ານຜູ້ຖືຮຸ້ນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂໍແຈ້ງມາ ຍັງບັນດາທ່ານຊາບຄື:

1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊຳລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານໂພນທັນເໜືອ, ຖະໜົນ T4, ເມືອງໄຊເສດຖາ, ນະຄອນຫຼວງ ວຽງຈັນ. ໂທລະສັບ +85621 454361-4. ເລີ່ມແຕ່ວັນທີ **29 ມີນາ 2024.**

1.2 ຜູ້ຖືຮຸ້ນທີ່ມີຈຸດປະສົງຈະເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍສາມາດສົ່ງຄຳຖາມທີ່ຕິດພັນກັບວາລະກອງ ປະຊຸມມາກ່ອນບໍ່ໃຫ້ເກີນວັນທີ **24 ເມສາ 2024** ຜ່ານອີເມວ: agm-egm@edlgen.com.la ແລະ ບໍລິສັດຂໍ ແຈ້ງໃຫ້ຜູ້ຖືຮຸ້ນທີ່ປະຊຸມຜ່ານລະບົບອອນລາຍນັ້ນຊາບວ່າ ບໍ່ໄດ້ສິດໃຫ້ຕັ້ງຄຳຖາມໃນເວລາທີ່ດຳເນີນກອງປະຊຸມ.

1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກຳມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ, ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 6</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ ຖືກຕ້ອງຄົບຖ້ວນ ແລະ ໝາຍ **(✔)** ເພື່ອເລືອກເອົາກຳມະການສະພາບໍລິຫານອິດສະຫຼະ ຂອງບໍລິສັດທ່ານໃດໜຶ່ງ ເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: proxy-register@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກ ເລຂານຸການ ບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 26 ເມສາ 2024**

2. ສຳລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານຳບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນຄົນ ຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.

3. ສຳລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນຳເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ ຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 7</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນ ກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.

4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄຳຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ພຸດທະສອນ ອິນ ທະປັນຍາ; ໂທ: (856-20) 29 898989 ແລະ ທ່ານ ນາງ ມາລາໂສ ບຸນມີ (856-20) 2395 4994 ໃນໂມງ ລັດຖະການ.

ວາລະທີ 1. ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຜ່ານມາ.

ລາຍລະອຽດ:

ລາຍງານຜົນການຈັດຕັ້ງປະຕິບັດ ມະຕິກອງປະຊຸມຜູ້ຖືຮຸ້ນປະຈຳປີຜ່ານມາ ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບ ເຖິງຜົນສຳເລັດ ການຈັດຕັ້ງປະຕິບັດມະຕິກອງປະຊຸມດັ່ງກ່າວ.

I. ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

1. ກ່ຽວກັບວາລະທີ 1, 2, 3, 4, 5, 6, 7 ແລະ 8 ແມ່ນໄດ້ຈັດຕັ້ງປະຕິບັດຕາມການເຫັນດີຂອງປະຊຸມສາມັນຜູ້ຖືຮຸ້ນແລ້ວ.

ຄຳເຫັນຂອງສະພາບໍລິຫານ:

ລາຍງານການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງຜ່ານມາ ແມ່ນລາຍງານໃຫ້ຜູ້ຖືຮຸ້ນຮັບຊາບເທົ່ານັ້ນ, ໂດຍວາລະນີ້ແມ່ນບໍ່ມີການລົງຄະແນນສຽງ.

ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023.

ລາຍລະອຽດ:

ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023 ໄດ້ຈັດຂຶ້ນໃນວັນທີ **19 ຕຸລາ 2023**, ຊຶ່ງບໍລິສັດ ໄດ້ມີການບັນທຶກກອງປະຊຸມດັ່ງກ່າວ ມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

ຄຳເຫັນຂອງສະພາບໍລິຫານ:

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023, ວັນທີ **19 ຕຸລາ 2023**.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດ ໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2023 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2023.

ການເຄື່ອນໄຫວທຸລະກິດ ຂອງບໍລິສັດໃນ 6 ເດືອນຕົ້ນປີ 2023 ບໍລິສັດມີກຳໄລຈຳນວນ 178,64 ຕື້ກີບ ອີງຕາມເອກະສານລາຍງານການເງິນແບບລວມ, ຊຶ່ງຜູ້ກວດສອບພາຍນອກໄດ້ມີການທົບທວນແລ້ວ ແລະ ບໍລິສັດໄດ້ເປີດເຜີຍລາຍງານດັ່ງກ່າວໃນເວັບໄຊທ໌ຂອງຕະຫລາດຫລັກຊັບລາວ ແລະ ເວັບໄຊທ໌ຂອງບໍລິສັດ. ບໍລິສັດບໍ່ອະນຸມັດຈ່າຍເງິນປັນຜົນ 6 ເດືອນຕົ້ນປີ 2023 ໃຫ້ຜູ້ຖືຮຸ້ນ ເນື່ອງຈາກວ່າບໍລິສັດຍັງມີພັນທະໃນການຊຳລະຮຸ້ນກູ້ ແລະ ເງິນກູ້ທີ່ຈະຄົບກຳນົດໃນໄຕມາດ 3 ແລະ ໄຕມາດ 4 ປີ 2023.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດເອົາລາຍງານການເງິນ 6 ເດືອນຕົ້ນປີ 2023 ແລະ ບໍ່ອະນຸມັດການຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2023.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 4: ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2023 ລວມທັງລາຍງານການເງິນຂອງບໍລິສັດ ປີ 2023.

ລາຍລະອຽດ:

ການດຳເນີນທຸລະກິດຂອງ ຜ-ຟຟລ ໃນປີ 2023 ແມ່ນໄດ້ຜະລິດກະແສໄຟຟ້າຂາຍຍົກໃຫ້ ລັດວິສາຫະກິດໄຟຟ້າລາວ (ຟຟລ) ຕາມສັນຍາຊື້-ຂາຍໄຟຟ້າ (PPA) ແລະ ດຳເນີນການຕາມກົດໝາຍແລະກົດລະບຽບຕ່າງໆ ຂອງ ບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບລາວ. ຜ-ຟຟລ ມີທຶນຈົດທະບຽນ ຈຳນວນ 6.717,21 ຕື້ກີບ ແລະ ມີຮຸ້ນສາມັນ ເທົ່າກັບ 1.679.303.697 ຮຸ້ນ. ຜົນການດຳເນີນທຸລະກິດໃນປີ 2023 ສາມາດສັງລວມໄດ້ດັ່ງນີ້:

1. ກຳລັງຕິດຕັ້ງ ແລະ ການຜະລິດ

ໃນທ້າຍປີ 2023, ຜ-ຟຟລ ມີກຳລັງຕິດຕັ້ງທັງໝົດມີ 1.736,72 MW, ໃນນີ້ລວມມີ ເຂື່ອນໄຟຟ້າ ພະລັງງານນ້ຳຢູ່ໃນການຄຸ້ມຄອງ ລວມກຳລັງຕິດຕັ້ງ 717 MW, ການເຂົ້າຖືຮຸ້ນໃນເຂື່ອນໄຟຟ້າພະລັງງານນ້ຳ ຂອງຜູ້ ຜະລິດໄຟຟ້າເອກະລາດ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ ຈຳນວນ 1.019,72 MW.

ໃນປີ 2023, ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ສາມາດຜະລິດພະລັງງານໄຟຟ້າໄດ້ເທົ່າກັບ **2.994,76 GWh**. ການຜະລິດຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດ ທີ່ ຜ-ຟຟລ ເຂົ້າຖືຮຸ້ນ ສາມາດຜະລິດໄດ້ **4.437,73 GWh** ຕາມສັດສ່ວນຖືຮຸ້ນ. ດັ່ງນັ້ນ, ໃນປີ 2023 ຜ-ຟຟລ ສາມາດຜະລິດພະລັງງານໄຟຟ້າ ໄດ້ທັງໝົດ **7.432,49 GWh.**

2. ລາຍຮັບ ແລະ ລາຍຈ່າຍ.

ດ້ານລາຍຮັບ: ລາຍຮັບ ຂອງ ຜ-ຟຟລ ປະກອບດ້ວຍ ລາຍຮັບຈາກການຂາຍກະແສໄຟຟ້າ ໃຫ້ແກ່ ຟຟລ, ກຳໄລຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນບັນດາໂຄງການເຂື່ອນໄຟຟ້າຜູ້ຜະລິດໄຟຟ້າ ເອກະລາດ (IPPs) ແລະ ລາຍຮັບອື່ນໆ ໂດຍມີລາຍລະອຽດດັ່ງນີ້:

- ລາຍຮັບ ຈາກການຂາຍກະແສໄຟຟ້າໃຫ້ແກ່ ຟຟລ ລວມເປັນເງິນ **1.410,01** ຕື້ກີບ.
- ກຳໄລ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຈຳນວນ **1.279,64** ຕື້ກີບ.
- ລາຍຮັບອື່ນໆ ລວມເປັນເງິນ **462,86** ຕື້ກີບ.

ດັ່ງນັ້ນ, ຕົວເລກລາຍຮັບ ລວມທັງໝົດ ເທົ່າກັບ **3.152,51** ຕື້ກີບ.

ດ້ານລາຍຈ່າຍ: ລາຍຈ່າຍໃນການດຳເນີນທຸລະກິດ ປະກອບດ້ວຍ: ລາຍຈ່າຍຕົ້ນທຶນການຂາຍ, ລາຍ ຈ່າຍການດຳເນີນງານ, ຂາດທຶນຈາກອັດຕາແລກປ່ຽນ, ລາຍຈ່າຍທາງການເງິນ ແລະ ອາກອນກຳໄລ, ໂດຍມີລາຍ ລະອຽດດັ່ງນີ້:

- ລາຍຈ່າຍຕົ້ນທຶນການຂາຍ ຈຳນວນ **693,66** ຕື້ກີບ.
- ລາຍຈ່າຍການດຳເນີນງານ ຈຳນວນ **241,22** ຕື້ກີບ
- ຂາດທຶນຈາກອັດຕາແລກປ່ຽນ ຈຳນວນ **2.077,04** ຕື້ກີບ
- ລາຍຈ່າຍທາງການເງິນ ຈຳນວນ **1.233,22** ຕື້ກີບ
- ລາຍຈ່າຍອາກອນກຳໄລ ຈຳນວນ **1,12** ຕື້ກີບ

ດັ່ງນັ້ນ, ຕົວເລກລາຍຈ່າຍ ລວມທັງໝົດ ເທົ່າກັບ **4.246,26** ຕື້ກີບ.

3. ກຳໄລ / ຂາດທຶນ

ໃນປີ 2023 ຜ-ຟຟລ ມີລາຍຮັບລວມທັງໝົດ **3.152,51** ຕື້ກີບ ແລະ ລາຍຈ່າຍລວມ **4.246,26** ຕື້ ກີບ, ເຮັດໃຫ້ຂາດທຶນ ເທົ່າກັບ **1.093,75** ຕື້ກີບ.

4. ການປະຕິບັດພັນທະ ຕໍ່ລັດຖະບານ.

ຜ-ຟຟລ ໄດ້ປະຕິບັດການມອບພັນທະໃຫ້ແກ່ລັດຖະບານ ຢ່າງເປັນປົກກະຕິ ແລະ ທັນເວລາ. ການມອບພັນທັນໃຫ້ແກ່ລັດຖະບານ ປະຈຳປີ 2023 ລວມມີ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຂາຍກະແສໄຟຟ້າ, ອາກອນກຳໄລ 10%, ອາກອນມູນຄ່າເພີ່ມ, ອາກອນລາຍໄດ້ຂອງບຸກຄົນ ລວມເປັນເງິນທັງໝົດ **11,55** ຕື້ກີບ.

5. ດ້ານບຸກຄະລາກອນ ແລະ ການພັດທະນາຊັບພະຍາກອນມະນຸດ.

ຜ-ຟຟລ ປະກອບມີ ຈຳນວນບຸກຄະລາກອນ ຢູ່ໃນການຄຸ້ມຄອງ ທັງໝົດ **795** ຄົນ, ຍິງ **139** ຄົນ. ໂດຍອີງຕາມວິໄສທັດ ແລະ ນະໂຍບາຍ ຕໍ່ກັບວຽກງານພັດທະນາບຸກຄະລາກອນ, ການຍົກລະດັບ ທາງດ້ານວິຊາສະເພາະ ແລະ ການຝຶກອົບຮົມທັງພາຍໃນ ແລະ ຕ່າງປະເທດ ລວມທັງໝົດ **476** ຄົນ.

6. ກິດຈະກຳວຽກງານສິ່ງແວດລ້ອມ-ສັງຄົມ.

ໃນປີ 2023, ຜ-ຟຟລ ໄດ້ໃຊ້ງົບປະມານເຂົ້າໃນວຽກງານ ດ້ານສິ່ງແວດລ້ອມ ແລະ ສັງຄົມ **ຈຳນວນ 3.385,20 ລ້ານກີບ**.

7. ການລະດົມທຶນ.

ໃນ ປີ 2023 ຜ-ຟຟລ ມີການລະດົມທຶນຜ່ານການອອກຈຳໜ່າຍຮຸ້ນກູ້ສະກຸນເງິນບາດຈຳນວນ 3 ຄັ້ງ ລວມມູນຄ່າ 3.576,2 ລ້ານບາດ ແລະ ມີການກູ້ຢືມກັບ ບັນດາທະນາຄານພາຍໃນ ຈຳນວນ 1.500 ລ້ານບາດ ແລະ 55 ລ້ານໂດລາ ສຫລ ເພື່ອມາຊຳລະຄືນເງິນຕົ້ນ ແລະ ດອກເບ້ຍຂອງຮຸ້ນກູ້ເດີມທີ່ຄົບກຳນົດຊຳລະ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດເອົາບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2023 ລວມທັງລາຍງານການເງິນຂອງບໍລິສັດ ປີ 2023.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 5: ພິຈາລະນາ ແລະ ອະນຸມັດແຜນການດຳເນີນທຸລະກິດຂອງບໍລິສັດປີ 2024.

<u>ລາຍລະອຽດ:</u>

1. <u>ການຜະລິດ</u>

❖ **<u>ກຳລັງການຜະລິດ:</u>**

- ເຂື່ອນໄຟຟ້າທີ່ຂຶ້ນກັບ ຜ-ຟຟລ ຈຳນວນ 13 ແຫ່ງ ລວມກຳລັງຕິດຕັ້ງ **944 MW**
- ເຂື່ອນໄຟຟ້າທີ່ ຜ-ຟຟລ ເຂົ້າຖືຮຸ້ນ ຈຳນວນ 18 ແຫ່ງ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ **1.075,22 MW**

ລວມກຳລັງຕິດຕັ້ງທັງໝົດ 2.019,22 MW

❖ **<u>ແຜນການຜະລິດພະລັງງານໄຟຟ້າ:</u>**

- ຕົວເລກແຜນການຜະລິດ ຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ **3.127,90 GWh**.
- ຕົວເລກແຜນການຜະລິດ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ **4.765,64 GWh ຕາມສັດສ່ວນຖືຮຸ້ນ.**

ລວມຕົວເລກແຜນການຜະລິດພະລັງງານໄຟຟ້າ ໃນປີ 2024 ທັງໝົດເທົ່າກັບ 7.893,54 GWh

2. <u>ການຈຳໜ່າຍພະລັງງານໄຟຟ້າ.</u>

- ແຜນການຈຳໜ່າຍຈາກເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ເທົ່າກັບ **3.076,84 GWh**.
- ແຜນການຈຳໜ່າຍ ຈາກເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຜ-ຟຟລ ເຂົ້າຖືຮຸ້ນ ເທົ່າກັບ **4.765,19 GWh ໂດຍອີງຕາມສັດສ່ວນການຖືຮຸ້ນ.**

ລວມຕົວເລກແຜນການຈຳໜ່າຍພະລັງງານໄຟຟ້າ ໃນປີ 2024 ທັງໝົດເທົ່າກັບ 7.842,02 GWh

3. ການລົງທຶນເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ

ໃນປີ 2024, ຜ-ຟຟລ ຈະສືບຕໍ່ລົງທຶນໃນໂຄງການຕ່າງໆ ໂດຍສະເພາະບັນດາເຂື່ອນທີ່ໄດ້ລະບຸໄວ້ໃນໜັງສືຊວນຊື້ຂອງ ຜ-ຟຟລ ລວມທັງໂຄງການໃໝ່ອື່ນໆ ເຊັ່ນ:

- **ຮຸ້ນໃນໂຄງການເຂື່ອນ IPPs ທີ່ລົງທຶນໂດຍກົງ**

1.	ເຂື່ອນໄຟຟ້ານ້ຳພູນ	ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ	51%	22,95 MW.
2.	ເຂື່ອນໄຟຟ້ານ້ຳດີກ 1	ກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ	70%	10,5 MW.

4. ການມອບພັນທະໃຫ້ລັດ

ຜ-ຟຟລ ມີພັນທະໃຫ້ລັດ ປະກອບດ້ວຍ ຄ່າພາກຫຼວງ 1% ຂອງລາຍຮັບຈາກການຈຳໜ່າຍກະແສໄຟຟ້າ, ອາກອນມູນຄ່າເພີ່ມ, ອາກອນກຳໄລ ແລະ ອາກອນລາຍໄດ້ຂອງບຸກຄົນ.

5. ການພັດທະນາຊັບພະຍາກອນມະນຸດ

ໂດຍແນໃສ່ການສ້າງບຸກຄະລາກອນ ຂອງ ຜ-ຟຟລ ໃຫ້ເປັນມືອາຊີບ, ສາມາດປະຕິບັດວຽກງານໄດ້ຢ່າງຄ່ອງຕົວ ແລະ ມີປະສິດທິພາບສູງ ເພື່ອສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງການດຳເນີນທຸລະກິດໃນອະນາຄົດ, ບໍລິສັດໄດ້ເອົາໃຈໃສ່ ວາງແຜນໄລຍະສັ້ນ ແລະ ໄລຍະຍາວ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານກຳມະກອນ ຢ່າງເປັນລະບົບ, ໂດຍສະເພາະ ຄວາມຮູ້ພື້ນຖານໃນການປະຕິບັດລະບຽບການ, ການຍົກສູງວິຊາສະເພາະທາງດ້ານເຕັກນິກວິຊາການ. ໃນປີ 2024, ຜ-ຟຟລ ຈະໄດ້ສືບຕໍ່ສ້າງວິຊາການຊຳນານງານ, ຍົກລະດັບຄວາມຮູ້ຄວາມສາມາດຂອງພະນັກງານ ແລະ ຝຶກອົບຮົມດ້ານການດຳເນີນທຸລະກິດການເງິນ, ບັນດາຂໍ້ກຳນົດ ແລະ ກົດລະບຽບຂອງວຽກງານຕະຫຼາດຫຼັກຊັບ. ແຜນພັດທະນາບຸກຄະລາກອນຂອງ ຜ-ຟຟລ ໄດ້ກວມເອົາດ້ານການບໍລິຫານ, ດ້ານການເງິນ ແລະ ເຕັກນິກວິຊາການຕ່າງໆ ໂດຍມີແຜນຈັດສົ່ງເຂົ້າຝຶກອົບຮົມ ທີ່ສູນຝຶກ ຟຟລ ແລະ ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ.

6. ວຽກງານສິ່ງແວດລ້ອມ ແລະ ສັງຄົມ

ເພື່ອເຮັດໃຫ້ການດຳເນີນທຸລະກິດຜະລິດພະລັງງານໄຟຟ້າ ໃນການສືບຕໍ່ປະກອບສ່ວນໃຫ້ມີການພັດທະນາ ແລະ ຄວາມຍືນຍົງ ຕໍ່ກັບສັງຄົມ ແລະ ທຳມະຊາດແວດລ້ອມບໍລິເວນເຂື່ອນ, ໃນປີ 2024 ຜ-ຟຟລ ມີແຜນວຽກງານສິ່ງແວດລ້ອມ-ສັງຄົມ ໂດຍແບ່ງອອກເປັນ 2 ພາກສ່ວນ ຄື: (1) ການປະຕິບັດພັນທະຕາມສັນຍາສຳປະທານ ເຊັ່ນ: ວຽກງານຄຸ້ມຄອງອ່າງໂຕ່ງ, ວຽກງານຄຸ້ມຄອງສິ່ງແວດລ້ອມອ້ອມຂ້າງເຂື່ອນ ແລະ ຄຸ້ມຄອງຄຸນນະພາບນ້ຳ; (2) ການປະກອບສ່ວນຕໍ່ສັງຄົມ ແລະ ພັດທະນາຊຸມຊົນອ້ອມຂ້າງເຂື່ອນ ໂດຍການມີສ່ວນຮ່ວມຂອງຊຸມຊົນ ແລະ ອຳນາດການປົກຄອງທ້ອງຖິ່ນ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາອະນຸມັດເອົາແຜນການດຳເນີນທຸລະກິດຂອງບໍລິສັດປີ 2024.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 6. ພິຈາລະນາ ແລະ ອະນຸມັດເລື່ອງເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2023.

ລາຍລະອຽດ:

ອີງຕາມກົດລະບຽບຂອງບໍລິສັດ, ບໍລິສັດມີນະໂຍບາຍໃນການແບ່ງເງິນປັນຜົນໃນອັດຕາສ່ວນບໍ່ຫຼຸດ 50 ສ່ວນຮ້ອຍຂອງກຳໄລສຸດທິ, ພາຍຫລັງຫັກສ້າງເປັນຄັງສຳຮອງຕາມລະບຽບການ ແລະ ຄັງສຳຮອງອື່ນໆ (ຖ້າມີ) ໃນແຕ່ລະປີ, ຊຶ່ງການແບ່ງເງິນປັນຜົນຈະຂຶ້ນຢູ່ກັບສະພາບເສດຖະກິດ ແລະ ແຜນການລົງທຶນຕ່າງໆໃນອະນາຄົດ.

ສະເໜີກອງປະຊຸມຜູ້ຖືຮຸ້ນ ພິຈາລະນາ ແລະ ອະນຸມັດຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2023 ໃຫ້ແກ່ຜູ້ຖືຮຸ້ນທີ່ເນື່ອງຈາກບໍລິສັດບໍ່ມີກຳໄລສຸດທິ.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາອະນຸມັດຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2023.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 7. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນຄະນະຜູ້ອຳນວຍການໃຫຍ່ຜູ້ເກົ່າ ທີ່ໄດ້ໄປຮັບໜ້າທີ່ໃໝ່ ແລະ ພັກການຮັບອຸດໜູນບຳເນັດ.

ລາຍລະອຽດ:

ໂດຍອີງຕາມແຜນການດຳເນີນທຸລະກິດຂອງບໍລິສັດທີ່ນັບມື້ຈະເຕີບໃຫຍ່ຂຶ້ນເລື້ອຍໆ ແລະ ເພື່ອເຮັດໃຫ້ ການດຳເນີນທຸລະກິດຂອງບໍລິສັດບັນລຸເປົ້າໝາຍທີ່ວາງໄວ້. ບໍລິສັດເຫັນສົມຄວນ ສະເໜີແຕ່ງຕັ້ງຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນຄະນະຜູ້ອຳນວຍການໃຫຍ່ຜູ້ເກົ່າທີ່ໄດ້ໄປຮັບໜ້າທີ່ໃໝ່ ແລະ ພັກການຮັບອຸດໜູນບຳເນັດ. ໂດຍມີຊີວະປະຫວັດຫຍໍ້ ໃນເອກະສານຄັດຕິດ 4 ແລະ ມີລາຍຊື່ດັ່ງລຸ່ມນີ້:

1) ແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ 02 ທ່ານ ຊຶ່ງມີລາຍຊື່ດັ່ງນີ້:

(1). **ທ່ານ ປອ. ບຸນແທນ ຈັນສະໄໝ,** ຜູ້ອຳນວຍການຝ່າຍພັດທະນາທຸລະກິດ ເປັນຮອງຜູ້ອຳນວຍການໃຫຍ່;

(2). **ທ່ານ ດາວວຽງ ສຸນັນທະລາດ**, ຜູ້ອຳນວຍການຝ່າຍເຕັກນິກ EDL-Gen O&M ເປັນຮອງຜູ້ອຳນວຍການໃຫຍ່.

2) ຍົກຍ້າຍ ແລະ ແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ ໄປຮັບໜ້າທີ່ໃໝ່ຕາມຂໍ້ຕົກລົງສະບັບເລກທີ 3863/ກງ, ລົງວັນທີ 30 ພະຈິກ 2023 ຄື:

(1) ຍົກຍ້າຍ ແລະ ແຕ່ງຕັ້ງ **ທ່ານ ວັນແສງ ວັນນະວົງ** ຮອງຜູ້ອຳນວຍການໃຫຍ່ ເປັນຮອງຜູ້ອຳນວຍການ ລັດວິສາຫະກິດຖືຮຸ້ນລາວ.

3) ເຫັນດີອະນຸມັດໃຫ້ພະນັກງານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພັກການຮັບອຸດໜູນບຳເນັດ ຕາມຂໍ້ຕົກລົງ ສະບັບເລກທີ 3864/ກງ, ລົງວັນທີ 30 ພະຈິກ 2023 ຄື:

(1). ເຫັນດີໃຫ້ **ທ່ານ ນາງ ສຸກສັນ ພົງພິລາ** ຮອງຜູ້ອຳນວຍການໃຫຍ່ ພັກການຮັບອຸດໜູນບຳເນັດ ຕາມກົດໝາຍ ແລະ ລະບຽບການ.

4) ເຫັນດີອະນຸມັດໃຫ້ ທ່ານ ກຸນລະພັນ ວົງນາທີ ຮອງຜູ້ອຳນວຍການໃຫຍ່ ພັກການຮັບອຸດໜູນບຳເນັດ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງການແຕ່ງຕັ້ງຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນຄະນະຜູ້ອຳນວຍການໃຫຍ່ຜູ້ເກົ່າ ທີ່ໄດ້ໄປຮັບໜ້າທີ່ໃໝ່ ແລະ ພັກການຮັບອຸດໜູນບຳເນັດ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 8. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານ ເພື່ອປ່ຽນແທນຜູ້ທີ່ຄົບອາຍຸການ.

<u>ລາຍລະອຽດ:</u>

ອີງຕາມບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021, ຄັ້ງວັນທີ 27/04/2021 ວາລະທີ 1 ໄດ້ລະບຸໄວ້ວ່າ ອາຍຸການຂອງບັນດາສະພາບໍລິຫານ ຂອງບໍລິສັດທັງໝົດ ມີກຳນົດ 02 ປີ ໂດຍເລີ່ມແຕ່ວັນທີກອງປະຊຸມ ຜູ້ຖືຮຸ້ນ ປະຈຳປີ 2021 ເປັນຕົ້ນມາ, ຊຶ່ງມາຮອດປັດຈຸບັນເຫັນວ່າອາຍຸການຂອງກຳມະການສະພາບໍລິຫານບາງທ່ານໄດ້ ປະຕິບັດວຽກງານຄົບວາລະ 02 ປີແລ້ວ.

ສະເໜີກອງປະຊຸມພິຈາລະນາແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການບາງທ່ານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ປະຕິບັດວຽກງານຄົບວາລະແລ້ວ ສືບຕໍ່ປະຕິບັດວຽກງານອີກວາລະໜຶ່ງ, ຊີວະປະຫວັດຫຍໍ້ຂອງ ບັນດາສະພາບໍລິຫານແຕ່ລະທ່ານໄດ້ມີລາຍລະອຽດໃນເອກະສານຄັດຕິດ ທີ່ໄດ້ຄັດຕິດມາພ້ອມກັບໜັງສືແຈ້ງເຊີນ, ໂດຍ ມີລາຍຊື່ດັ່ງນີ້:

1. **ທ່ານ ວົງສະກຸນ ຍິ່ງຍົງ** ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ / ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເປັນຮອງປະທານສະພາບໍລິຫານ;
2. **ທ່ານ ສົມພິດ ແກ້ວວິຈິດ** ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່ ເປັນກຳມະການສະພາ ບໍລິຫານ ສືບຕໍ່ວາລະໜຶ່ງ;
3. **ທ່ານ ຊິນລະວິດ ວິນິດໄສ** ຜູ້ອຳນວຍການບໍລິສັດ ຣາຊ-ລາວ ບໍລິການ ຈຳກັດ ເປັນກຳມະການສະພາບໍລິຫານ ສືບຕໍ່ ວາລະໜຶ່ງ;
4. **ທ່ານ ຄຳມຸນ ວິພົງໄຊ** ອະດີດຮອງລັດຖະມົນຕີກະຊວງພາຍໃນ ເປັນກຳມະການສະພາບໍລິຫານອິດສະຫຼະ ສືບຕໍ່ ວາລະໜຶ່ງ;
5. **ທ່ານ ຄຳແກ້ວ ວິສິສົມບັດ** ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ເປັນກຳມະການສະພາ ບໍລິຫານອິດສະຫຼະ ສືບຕໍ່ວາລະໜຶ່ງ;

6. **ທ່ານ ປອ. ພັນປະກິດ ອ່ອນພັນດາລາ** ເປັນກຳມະການສະພາບໍລິຫານອິດສະຫຼະ ສືບຕໍ່ວາລະໜຶ່ງ;
7. **ທ່ານ ພົງສະຫວັດ ເສນາພອນ** ປະທານສະພາບໍລິຫານບໍລິສັດ ພົງຊັບທະວີກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ພົ້ນຕຳແໜ່ງ ການເປັນກຳມະການສະພາບໍລິຫານ; ແລະ
8. **ທ່ານ ສົມລັດ ເມກອາກາດ** ຜູ້ອຳນວຍການບໍລິສັດ ພົງຊັບທະວີກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ພົ້ນຕຳແໜ່ງການ ເປັນກຳມະການສະພາບໍລິຫານ.

ສະເໜີກຳນົດລາຍຊື່ຜູ້ອຳນວຍການ ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ດັ່ງນີ້:

1. ປະທານສະພາບໍລິຫານ ຫລື ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ລົງລາຍເຊັນ ແລະ ປະທັບກາບໍລິສັດແຕ່ພຽງຜູ້ດຽວ; ຫລື
2. ໃຫ້ຜູ້ອຳນວຍການອື່ນສອງທ່ານ ລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ເປັນຕົ້ນໄປ.

<u>ຄຳເຫັນຂອງສະພາບໍລິຫານ:</u>

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງເອົາການແຕ່ງຕັ້ງ ຮອງປະທານສະພາບໍລິຫານ, ກຳມະການສະພາບໍລິຫານບາງທ່ານທີ່ຄົບອາຍຸການ ແລະ ການກຳນົດອາຍຸການຂອງບັນດາ ກຳມະການສະພາບໍລິຫານບໍລິສັດ ລວມທັງການມອບອຳນາດດັ່ງກ່າວ.

<u>ຄະແນນສຽງທີ່ຕ້ອງໃຊ້:</u>

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຫລາຍກວ່າ ເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 9: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 09 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

<u>ລາຍລະອຽດ:</u>

ເນື່ອງຈາກມີການປ່ຽນແປງຄະນະສະພາບໍລິຫານ ຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງບໍລິຫານ ຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 09 ວ່າດ້ວຍ ກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ; ລາຍລະອຽດມີດັ່ງນີ້:

1) <u>ດັດແກ້ມາດຕາ 09 ວ່າດ້ວຍກຳມະການ ແລະ ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ:</u> ຂໍ້ມູນຂອງຮອງປະທານ ສະພາບໍລິຫານຜູ້ໃໝ່ຄື:

1. ຮອງປະທານສະພາບໍລິຫານ ຊື່ ແລະ ນາມສະກຸນ: ທ່ານ ວົງສະກຸນ ຍິ່ງຍົງ
   - ສັນຊາດ: ລາວ;
   - ທີ່ຢູ່ປະຈຸບັນ: ບ້ານ ນາເລົ່າ, ໜ່ວຍ 31, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

ສະພາບໍລິຫານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປັດຈຸບັນທັງໝົດມີ 09 ທ່ານ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອ ໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

ຄຳເຫັນຂອງສະພາບໍລິຫານ:

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງການດັດແກ້ ກົດ ລະບຽບບໍລິສັດ ມາດຕາ 09 ແລະ ມາດຕາ 12 ລວມທັງການມອບອຳນາດດັ່ງກ່າວ.

ຄະແນນສຽງທີ່ຕ້ອງໃຊ້:

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນ ຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜອ້ຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ 80 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປີ 2023

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມວິສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 31/10/2023

ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປີ 2023
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 19 ຕຸລາ 2023 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ສຸລິວັດ ສຸວັນນະຈຸມຄຳ ປະທານສະພາບໍລິຫານ ບໍລິສັດ ເປັນປະທານກອງປະຊຸມ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 32 ທ່ານ ແລະ ມອບສັນທະຈຳນວນ 49 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 81 ທ່ານ ຖືຮຸ້ນລວມກັນທັງໝົດ 1.556.703.350 ຮຸ້ນ ເທົ່າກັບ 92,70 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການຂອງບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ສຸລິວັດ ສຸວັນນະຈຸມຄຳ** ຕຳແໜ່ງ: ປະທານສະພາບໍລິຫານ/ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ ກະຊວງການເງິນ;
2. **ທ່ານ ສົມພິດ ແກ້ວວິຈິດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
3. **ທ່ານ ປະສົມພັດ ຄຳຕັນ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຮັກສາການຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ;
4. **ທ່ານ ພົງສະຫວັດ ເສນາພອນ** ຕຳແໜ່ງ: ກຳມະການສະພາບໍລິຫານ/ປະທານບໍລິສັດພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ (ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ);
5. **ທ່ານ ສົມລັດ ເມກອາກາດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການບໍລິສັດພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ;
6. **ທ່ານ ຊົນລະວິດ ວິນິດໄສ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການບໍລິສັດ ຣາຊ໌ລາວ ບໍລິການຈຳກັດ;
7. **ທ່ານ ສຸກສະຫວາດ ໂສສຸພັນ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຮອງຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ (ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ);

8.	**ທ່ານ ຄຳມຸນ ວິພິງໄຊ**	ຕຳແໜ່ງ:	ກຳມະການສະພາບໍລິຫານອິດສະຫຼະ/ອາດີດຮອງລັດຖະມົນຕີກະຊວງພາຍໃນ (ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ);
9.	**ທ່ານ ຄຳແກ້ວ ວິສິສົມບັດ**	ຕຳແໜ່ງ:	ກຳມະການສະພາບໍລິຫານອິດສະຫຼະ/ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປລາວ;
10.	**ທ່ານ ປອ. ພັນປະກິດ ອ່ອນພັນດາລາ**	ຕຳແໜ່ງ:	ກຳມະການສະພາບໍລິຫານອິດສະຫຼະ.
11.	**ທ່ານ ວົງສະກຸນ ຍິ່ງຍົງ**	ຕຳແໜ່ງ:	ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໂດຍອີງປະຊຸມມີ 11 ທ່ານ ຂາດປະຊຸມ 01 ທ່ານ ເນື່ອງຈາກຕິດພາລະກິດທາງການບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ຄື: **ທ່ານ ຈັນທະບຸນ ສຸກອາລຸນ** ຕຳແໜ່ງ: ຮອງປະທານສະພາບໍລິຫານ / ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຄະນະຜູ້ອຳນວຍການຝ່າຍຂອງບໍລິສັດ. ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຄະນະກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນໄດ້ຈັດກອງປະຊຸມທັງແບບຊ້ອງໜ້າ ແລະ ແບບອອນລາຍ ເພື່ອໃຫ້ຜູ້ຖືຮຸ້ນສາມາດເຂົ້າຮ່ວມໄດ້ຕາມຄວາມສະດວກຂອງແຕ່ລະທ່ານ. ສຳລັບບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຫ້ອງປະຊຸມແມ່ນໄດ້ໃສ່ຜ້າອັດປາກ ແລະ ນັ່ງເວັ້ນໄລຍະຫ່າງຕາມທີ່ພິທີການໄດ້ກຳນົດໄວ້ ແລະ ໂດຍສະເພາະບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍ ແມ່ນໄດ້ປະຕິບັດຕາມຄູ່ມືທີ່ໄດ້ແຈກຢາຍໃຫ້ພ້ອມກັບບັດເຊີນປະຊຸມ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ວົງສະກຸນ ຍິ່ງຍົງ ຜູ້ອຳນວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

1. ການລົງຄະແນນສຽງ:

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

ທ່ານປະທານໄດ້ກ່າວໄປແລ້ວໃນເບື້ອງຕົ້ນ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ຜ-ຟຟລ ໃນປີນີ້ ແມ່ນຈະມີການຈັດກອງປະຊຸມແບບຊ້ອງໜ້າ ແລະ ແບບອອນລາຍ. ຕໍ່ໄປ ຂ້າພະເຈົ້າຂໍແນະນຳວິທີການລົງຄະແນນໃນແຕ່ລະຮູບແບບການເຂົ້າປະຊຸມ ດັ່ງນີ້:

ທ່ານທີ່ເຂົ້າຮ່ວມກອງປະຊຸມແບບຊ້ອງໜ້າ: ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນຳໄປກວດນັບຄະແນນສຽງໃນວາລະນັ້ນໆ

ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ. ຖ້າຫາກ ບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ແຕ່ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນ ສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

ທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມແບບອອນລາຍ: ສາມາດລົງຄະແນນສຽງຜ່ານລະບົບປະຊຸມອອນ ລາຍ ໂດຍລາຍລະອຽດຂັ້ນຕອນ ແລະ ວິທີການຕ່າງໆ ແມ່ນທ່ານສາມາດເຂົ້າເບິ່ງໄດ້ໃນຄູ່ມືທີ່ໄດ້ຄັດຕິດໃນໜັງສືແຈ້ງ ເຊີນ ແລະ ໄດ້ເປີດເຜີຍໃຫ້ຊາບແລ້ວ ແລະ ບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍຊາບວ່າ ຄຳຖາມທີ່ ບັນດາທ່ານຜູ້ຖືຮຸ້ນໄດ້ສົ່ງມາ ຕາມການແນະນຳທີ່ໄດ້ລະບຸໄວ້ລະອຽດແລ້ວໃນໜັງສືຮຽນເຊີນປະຊຸມຜູ້ຖືຮຸ້ນ ທີ່ໄດ້ ເປີດເຜີຍໄປແລ້ວ ແລະ ບໍລິສັດຈະຕອບຄຳຖາມຂອງແຕ່ລະທ່ານໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ.

ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມ ຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງ ຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າ ລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນ ບັດລົງຄະແນນໃນກອງປະຊຸມຕື່ມອີກ.

2. ການນັບຜົນການລົງຄະແນນສຽງ

ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ແມ່ນໄດ້ນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າ ລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີມາຫັກລົບອອກ ຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມ ປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບ ຫຼັງ ຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະຊຸມ ຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບ ເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ບໍລິສັດ ໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳ ຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022

ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 25 ເມສາ 2023 ທີ່ຜ່ານມາ, ຊຶ່ງ ບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ ເອກະສານຄັດຕິດ 2 ທີ່ໄດ້ຄັດຕິດໃນບັດເຊີນ ທີ່ໄດ້ສົ່ງ ໃຫ້ບັນດາທ່ານຜູ້ຖືຮຸ້ນແລ້ວ. ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ແລະ ສະພາບໍລິຫານໄດ້ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ, ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022.

ຫຼັງຈາກ ຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2022 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງ ຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໄດ້ຈັດຂຶ້ນໃນວັນທີ 25 ເມສາ 2023, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.556.703.350 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ**

ວາລະທີ 2. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນທ່ານຣັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າ.

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ໂດຍອີງຕາມແຜນການດຳເນີນທຸລະກິດຂອງບໍລິສັດທີ່ນັບມື້ຈະເຕີບໃຫຍ່ຂຶ້ນເລື້ອຍໆ ແລະ ເພື່ອເຮັດໃຫ້ ການດຳເນີນທຸລະກິດຂອງບໍລິສັດບັນລຸເປົ້າໝາຍທີ່ວາງໄວ້. ບໍລິສັດ ເຫັນສົມຄວນ ສະເໜີແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່, ໂດຍມີຊີວະປະຫວັດຫຍໍ້ ໃນເອກະສານຄັດຕິດ 3 ແລະ ມີລາຍຊື່ດັ່ງລຸ່ມນີ້:

1. ແຕ່ງຕັ້ງ ທ່ານ ວິງສະກຸນ ຍິ່ງຍົງ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນຜູ້ເກົ່າ.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງການແຕ່ງຕັ້ງຜູ້ອຳນວຍ ການໃຫຍ່ຜູ້ໃໝ່ ດັ່ງກ່າວຂ້າງເທິງ. ຕາມກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

<u>ຄຳເຫັນຂອງຜູ້ຖືຮຸ້ນ:</u> (1) ທ່ານ ນາງ ຕຸກຕາ ແກ້ວວິຈິດ (ສະມາຄົມຜູ້ຖືຮຸ້ນໄທ):

1) **ໃນການພິຈາລະນາ ແລະ ເຫັນດີຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນ ທ່ານຣັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າ ສະແດງວ່າຜູ້ອຳນວຍການໃຫຍ່ 2 ທ່ານແມ່ນບໍ່?**
2) **ກໍລະນີຕຳແໜ່ງຜູ້ຮັກສາການ ມີອຳນາດຂອບເຂດແນວໃດ ທີ່ບໍ່ຄືຜູ້ອຳນວຍການໃຫຍ່ ?**

3) **ຕຳແໜ່ງ ຂອງທ່ານ ວັນແສງ ວັນນະວົງ ເປັນຮັກສາການຢູ່ກ່ອນແລ້ວ ແມ່ນທ່ານ ຈະ ຢູ່ພຽງຊົ່ວຄາວ ຫຼື ບໍ່ ແລະ ມີເຫດຜົນຫຍັງທີ່ ທ່ານຈະບໍ່ຢູ່ນຳ?**

(2) ປະທານກອງປະຊຸມ:

1) **ສຳລັບການແຕ່ງຕັ້ງຜູ້ອຳນວຍການໃຫຍ່ ກໍຄື ທ່ານ ວົງສະກຸນ ຍົ່ງຍົງ ເປັນ ຜູ້ອຳນວຍການໃຫຍ່ ຜູ້ໃໝ່, ເຊິ່ງໃນຕົວຈິງແລ້ວ ທ່ານ ວັນແສງ ວັນນະວົງ ແມ່ນຢູ່ ໃນຕຳແໜ່ງຮັກສາການໃນເມື່ອກ່ອນ ເຊິ່ງເມື່ອໄດ້ຖືກແຕ່ງຕັ້ງໃຫມ່ຈຶ່ງແມ່ນ ທ່ານ ວົງ ສະກຸນ ຍົ່ງຍົງ ເປັນຜູ້ອຳນວຍການໃຫຍ່ພຽງຜູ້ດຽວ.**

2) **ສິດອຳນາດຂອງຮັກສາການ ແມ່ນເພື່ອດຳລົງຕຳແໜ່ງຊົ່ວຄາວ ກ່ອນທີ່ຈະມີການ ແຕ່ງຕັ້ງຜູ້ອຳນວຍການທ່ານໃຫມ່ ແຕ່ໃນກໍລະນີ ທີ່ມີການແຕ່ງຕັ້ງຜູ້ອຳນວຍການໃຫຍ່ ຜູ້ໃໝ່ແລ້ວ, ທ່ານ ວັນແສງ ວັນນະວົງ ຈະເປັນ ຮອງຜູ້ອຳນວຍການໃຫຍ່ ຜ-ຝຝລ ທັງນີ້ເພື່ອເປັນໄປຕາມການຈັດລະບຽບ ແລະ ຂັ້ນຕອນ ຂອງທາງບໍລິສັດຕາມລຳດັບ.**

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີ ໃຫ້ກອງປະຊຸມພິຈາລະນາ ຮັບຮອງເອົາການແຕ່ງຕັ້ງ ຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນທ່ານຮັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າ ວາລະນີ້ກອງປະຊຸມຈະຕ້ອງ ລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອ ປ່ຽນແທນທ່ານຮັກສາການຜູ້ອຳນວຍການໃຫຍ່ຜູ້ເກົ່າຄື:

1. **ແຕ່ງຕັ້ງ ທ່ານ ວົງສະກຸນ ຍົ່ງຍົງ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນທ່ານຮັກສາ ການຜູ້ເກົ່າ. ກອງປະຊຸມມີມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າ ຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.556.703.350 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ**

ວາລະທີ 3. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ, ການ ກຳນົດຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງກຳມະການສະພາບໍລິຫານ ບໍລິສັດ.

ຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານບໍລິສັດໄດ້ດຳເນີນ ໄປຢ່າງຕໍ່ເນື່ອງ, ບໍລິສັດເຫັນສົມຄວນ ສະເໜີກອງປະຊຸມ ພິຈາລະນາຮັບຮອງ ການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ ໃໝ່ເພື່ອປ່ຽນແທນຜູ້ເກົ່າ, ການກຳນົດຜູ້ທີ່ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງກຳມະການ ສະພາບໍລິຫານບໍລິສັດດັ່ງນີ້:

ແຕ່ງຕັ້ງ ທ່ານ ວົງສະກຸນ ຍົ່ງຍົງ ເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານ ບໍລິສັດ ແທນກຳມະການສະພາບໍລິຫານຜູ້ເກົ່າ ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານບໍ່ເກີນ ສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ເປັນຕົ້ນໄປ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ແລະ ອາຍຸການຂອງກຳມະການສະພາບໍລິຫານບໍລິສັດ.

ຫຼັງຈາກຜູ້ອຳນວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມ ສາມາດຖາມໄດ້.

<u>ຄຳເຫັນຂອງຜູ້ຖືຮຸ້ນ:</u> (1) ທ່ານ ນາງ ຕຸກຕາ ແກ້ວວິຈິດ (ສະມາຄົມຜູ້ຖືຮຸ້ນໄທ): ເງື່ອນໄຂອຳນາດ ວາລະທີ 3:

ກ). ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນ ການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ພຽງຜູ້ດຽວ ຫລື; (ໂດຍບໍ່ສຳຄັນວ່າຈະສື່ຫຍັງພຽງຂໍແຕ່ຢູ່ໃນສາມຕຳແໜ່ງນັ້ນ ກໍຕົກຢູ່ໃນເງື່ອນໄຂຂອງຂໍ້ນີ້ແມ່ນບໍ່?ສາມາດລົງລາຍເຊັນໄດ້ພຽງຜູ້ດຽວແມ່ນຫຼືບໍ່?)

ຂ). ໃຫ້ກຳມະການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດແມ່ນບໍ່?

(2) ປະທານກອງປະຊຸມ: ໃນລະບຽບຂອງບໍລິສັດມະຫາຊົນ ກໍຄືບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເຮົາໄດ້ມີການກຳນົດຫຼັກການໄວ້ແລ້ວ ເພື່ອເປັນການຍັ້ງຢືນຄືນ ແລະ ເພື່ອເປັນການຮັບຮອງທາງດ້ານຫຼັກການ ໂດຍສະເພາະໃນເມື່ອມີການແຕ່ຕັ້ງຜູ້ອຳນວຍການຜູ້ໃຫມ່ ເພື່ອໃຫ້ເປັນໄປຕາຫຼັກການ ທີ່ ເພິ່ນໄດ້ກຳນົດ ສຳລັບຂໍ້ ກ ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ປະທັບກາ, ເຮົາມີການມອບໝາຍ ແລະ ແບ່ງຄວາມຮັບຜິດຊອບຄືແນວນັ້ນ ຫຼື ໃນກໍລະນີ ທີ່ຫາກວ່າ ທັງສາມທ່ານ ບໍ່ຢູ່ ແມ່ນ ເຮົາຈະມອບສິດໃຫ້ ຄະນະກຳມະການທີ່ໄດ້ປະຈຳການ ເປັນຄົນປະຕິບັດໜ້າທີ່ແທນ ໃນກໍລະນີ ທີ່ເປັນວຽກທີ່ຮີບດ່ວນ ແລະ ຈຳເປັນ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີ ໃຫ້ກອງປະຊຸມພິຈາລະນາ ຮັບຮອງເອົາການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ແລະ ອາຍຸການຂອງກຳມະການສະພາບໍລິຫານບໍລິສັດ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ແລະ ອາຍຸການຂອງກຳມະການສະພາບໍລິຫານບໍລິສັດຄື:

1) ແຕ່ງຕັ້ງ ທ່ານ ວິງສະກຸນ ຍິ່ງຍິງ ເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນກຳມະການສະພາບໍລິຫານຜູ້ເກົ່າ ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2/2023 ເປັນຕົ້ນໄປ.

ກອງປະຊຸມມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.556.703.350 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ.

ຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເນື່ອງຈາກມີການປ່ຽນແປງກຳມະການສະພາບໍລິຫານຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ເພື່ອປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່ຄື:

- ຊື່ ແລະ ນາມສະກຸນ: ທ່ານ ວິງສະກຸນ ຍິ່ງຍົງ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ບ້ານ ນາເລົ່າ, ໜ່ວຍ 31, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ລວມທັງການມອບອຳນາດຕາມທີ່ໄດ້ສະເໜີດັ່ງກ່າວທຸກປະການ.

ຫຼັງຈາກຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 4 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້.

<u>ຄຳເຫັນຂອງຜູ້ຖືຮຸ້ນ:</u> (1) ທ່ານ ນາງ ຕຸກຕາ ແກ້ວວິຈິດ (ສະມາຄົມຜູ້ຖືຮຸ້ນໄທ): ສຳລັບວາລະນີ້ ແມ່ນ ຄວາມເຫັນຂອງສະມາຄົມຜູ້ຖືຮຸ້ນໄທ ແມ່ນໜ້າຈະບໍ່ຖືກຕ້ອງໃນບາງສ່ວນ ສຳລັບວາລະທີ 4 ແມ່ນຢາກໃຫ້ກອງປະຊຸມບັນທຶກໃຫ້ມີຄວາມຊັດເຈນດ້ານເນື້ອໃນ ວ່າອຳນາດທີ່ຈະພົວພັນກັບເຈົ້າໜ້າທີ່ໃນການປ່ຽນສະພາບໍລິຫານທ່ານ ໃດແມ່ ໃຫ້ເປັນ ທ່ານ ວິງສະກຸນ ຍິ່ງຍົງ ແລະ ເມື່ອກອງປະຊຸມ ພິຈາລະນາເຫັນດີເປັນທີ່ ຮຽບຮ້ອຍແລ້ວ ກໍຈະຖືກດຳເນີນການໄດ້ພຽງແຕ່ທີ່ກອງປະຊຸມໄດ້ລະບຸ.

(2) ປະທານກອງປະຊຸມ: ແນ່ນອນວ່າມີການດັດແກ້ຈຳນວນໜຶ່ງ ແຕ່ສຳລັບບັນຫາທີ່ໄດ້ມີການຍົກມານັ້ນ ພວກເຮົາຈະກັບໄປກວດໃນລາຍລະອຽດເພີ່ມຕື່ມ ຖ້າຫາກວ່າມີສ່ວນທີ່ຈຳເປັນຈະຕ້ອງໄດ້ປັບປຸງເພີ່ມຕື່ມຫຼືບໍ່ ແມ່ນເຮົາຈະໄດ້ກວດຄືນ ຕາມທັດສະນະຄະຕິຂອງຂ້າພະເຈົ້າແລ້ວ ການດັດແກ້ນີ້ ແມ່ນເພື່ອຮັບປະກັນໃຫ້ສາມາດດຳເນີນ ບັນດາລະບຽບການຂັ້ນຕອນ ກໍ່ຄືການປະຕິບັດວຽກງານຂອງພວກເຮົາເອງ ແລະ ຈະນຳໄປເພື່ອພິຈາລະນາຕື່ມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ລວມທັງການມອບອຳນາດດັ່ງກ່າວ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ດັ່ງນີ້:

1) <u>ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:</u> ປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານຜູ້ໃໝ່ດັ່ງນີ້:

- ຊື່ ແລະ ນາມສະກຸນ: ທ່ານ ວິງສະກຸນ ຍິ່ງຍົງ

- ສັນຊາດ: ລາວ;

- ທີ່ຢູ່ປະຈຸບັນ: ບ້ານ ນາເລົ່າ, ໜ່ວຍ 31, ເມືອງ ສີໂຄດຕະບອງ,

ແຂວງ ນະຄອນຫຼວງວຽງຈັນ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດດັ່ງນີ້:

(ກ) ຈຳນວນຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. **ເຫັນດີຈຳນວນ 81 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.**

(ຂ) ຈຳນວນສຽງ (ຮຸ້ນ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. **ເຫັນດີ 1.556.703.350 ສຽງ (ຮຸ້ນ) ເທົ່າກັບ 92,699334 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.**

ພາຍຫຼັງການສອບຖາມ ແລະ ຊີ້ແຈງ ຂອງຄະນະສະພາບໍລິຫານແລ້ວ, ຖືວ່າໄດ້ພິຈາລະນາຄົບວາລະກອງປະຊຸມແລ້ວ; ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 32 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 49 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 81 ຄົນ ຖືຮຸ້ນລວມກັນ 1.556.703.350 ຮຸ້ນ ເທົ່າກັບ 92,70 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມໃນມື້ນີ້ ແລະ ຂໍອວຍພອນໄຊແດ່ ບັນດາຄະນະຜູ້ບໍລິຫານບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຂໍອວຍພອນໄຊແດ່ ທ່ານ ຜູ້ຖືຮຸ້ນທຸກທ່ານ ແລະ ບັນດາແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 16:00 ໂມງ.

ປະທານກອງປະຊຸມ

ສຸລິວັດ ສຸວັນນະຈູມຄຳ

ຮັບຮອງຖືກຕ້ອງ

ວິງສະກຸນ ຍິ່ງຍົງ

ລາຍງານການເງິນປະຈຳປີ 2023

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ
ໃນວັນທີ 31 ທັນວາ 2023

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		31 ທັນວາ 2023 ລ້ານກີບ	*31 ທັນວາ 2022 ລ້ານກີບ*	*31 ທັນວາ 2023 ລ້ານກີບ*	*31 ທັນວາ 2022 ລ້ານກີບ*
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ການລົງທຶນໃນ ບໍລິສັດໃນເຄືອ	4.1	-	-	541.241	541.241
ການລົງທຶນໃນ ບໍລິສັດຮ່ວມທຶນ	4.2	5.061.613	6.093.283	5.061.613	6.093.283
ການລົງທຶນໃນ ບໍລິສັດຮ່ວມທຸລະກິດ	4.3	4.067.647	3.689.092	4.067.647	3.689.092
ການລົງທຶນທົ່ວໄປ	4.4	375.688	375.688	375.688	375.688
ເງິນລ່ວງໜ້າຊັບສິນຜ່ອນກໍ່ສ້າງ	5	1.973.407	2.000.534	1.980.432	2.012.359
ຊັບສິນບັດຄົງທີ່ມີຕົວຕົນ, ສຸດທິ	6	8.111.267	8.307.936	7.931.699	8.127.898
ຊັບສິນບັດຄົງທີ່ບໍ່ມີຕົວຕົນ, ສຸດທິ		568	45	562	40
ເງິນລ່ວງໜ້າໃຫ້ຜູ້ຮັບເໝົາ	7	341.075	341.075	-	-
ຊັບສິນບໍ່ໝຸນວຽນອື່ນໆ		7.126	1.719	7.126	1.719
ລວມຊັບສິນບໍ່ໝຸນວຽນ		**19.938.391**	**20.809.372**	**19.966.008**	**20.841.320**
ຊັບສິນໝຸນວຽນ					
ເງິນສົດ ແລະ ທຽບເທົ່າເງິນສົດ	8	1.059.391	220.311	1.058.430	217.779
ການລົງທຶນໄລຍະສັ້ນ	9	61.563	52.005	61.563	52.005
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ	10	1.749.478	684.428	1.735.280	684.341
ເຄື່ອງໃຊ້ສາງ, ສຸດທິ		2.795	1.582	2.795	1.582
ຊັບສິນໝຸນວຽນອື່ນໆ	11	9.309.316	7.901.524	9.336.524	7.902.934
ລວມຊັບສິນໝຸນວຽນ		**12.182.543**	**8.859.850**	**12.194.592**	**8.858.641**
ລວມຊັບສິນທັ້ງໝົດ		**32.120.934**	**29.669.222**	**32.160.600**	**29.699.961**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຖານະການເງິນແບບສັງລວມ ແລະ ແບບແຍກກິດຈະການ
ໃນວັນທີ 31 ທັນວາ 2023

	ບົດ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		31 ທັນວາ 2023 *ລ້ານກີບ*	*31 ທັນວາ 2022* *ລ້ານກີບ*	*31 ທັນວາ 2023* *ລ້ານກີບ*	*31 ທັນວາ 2022* *ລ້ານກີບ*
ໜີ້ສິນ ແລະ ສ່ວນຂອງຜູ້ຖືຮຸ້ນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ໄລຍະຍາວ, ສຸດທິ	12	45.318	50.885	45.318	50.885
ຮຸ້ນກູ້ທີ່ຈັດເປັນໄລຍະຍາວ, ສຸດທິ	13	13.827.294	13.475.146	13.827.294	13.475.146
ໜີ້ສິນສັນຍາ Swap, ສຸດທິ	14	85.468	87.169	85.468	87.169
ລວມໜີ້ສິນບໍ່ໝຸນວຽນ		**13.958.080**	**13.613.200**	**13.958.080**	**13.613.200**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	15	818.625	503.538	860.493	521.205
ເງິນກູ້ໄລຍະຍາວທີ່ຈັດເປັນໄລຍະສັ້ນ	12	101.572	128.227	101.572	128.227
ໜີ້ສິນໄລຍະສັ້ນ, ສຸດທິ	12	1.486.770	216.766	1.486.770	216.766
ຮຸ້ນກູ້ທີ່ຈັດເປັນໄລຍະສັ້ນ, ສຸດທິ	13	4.616.831	2.922.856	4.616.831	2.922.856
ລາຍຈ່າຍຄ້າງຈ່າຍ	16	676.093	697.519	661.345	691.398
ໜີ້ສິນໝຸນວຽນອື່ນໆ		30.759	1.548	30.365	1.547
ລວມໜີ້ສິນໝຸນວຽນ		**7.730.650**	**4.470.454**	**7.757.376**	**4.481.999**
ລວມໜີ້ສິນທັງໝົດ		**21.688.730**	**18.083.654**	**21.715.456**	**18.095.199**
ທຶນຂອງຜູ້ຖືຮຸ້ນ					
ຮຸ້ນທຶນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສຳຮອງຕາມກົດໝາຍ	18	778.598	776.685	776.685	776.685
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່		468.988	443.608	468.988	443.608
ກຳໄລສະສົມ		1.483.786	2.667.088	1.496.635	2.681.633
ທຶນທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ		**10.434.208**	**11.590.217**	**10.445.144**	**11.604.762**
ບໍລິສັດທີ່ບໍ່ໄດ້ຄວບຄຸມໂດຍບໍລິສັດແມ່		**(2.004)**	**(4.649)**	**-**	**-**
ລວມທຶນທັງໝົດ		**10.432.204**	**11.585.568**	**10.445.144**	**11.640.762**
ລວມໜີ້ສິນ ແລະ ທຶນຂອງຜູ້ຖືຮຸ້ນ		**32.120.934**	**29.669.222**	**32.160.600**	**29.699.961**

ທ່ານ ວິງສະກຸນ ຍິ່ງຍົງ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຜູ້ອຳນວຍການຝ່າຍການເງິນ

01 ເມສາ 2024

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ຍົກ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		31 ທັນວາ 2023	*31 ທັນວາ 2022*	*31 ທັນວາ 2023*	*31 ທັນວາ 2022*
		ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ລາຍຮັບ	19	1.410.011	1.267.355	1.410.011	1.260.894
ຕົ້ນທຶນຂາຍ	20	(693.656)	(632.991)	(693.656)	(628.849)
ກຳໄລຈາກການດຳເນີນງານ		**716.355**	**634.364**	**716.355**	**632.045**
ລາຍຮັບອື່ນໆ	21	462.865	4.027.326	421.388	3.960.475
ລາຍຈ່າຍການດຳເນີນງານ	22	(241.219)	(210.120)	(201.370)	(180.238)
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ, ສຸດທິ		(2.077.036)	(2.623.348)	(2.083.838)	(2.615.988)
ສ່ວນແບ່ງກຳໄລຈາກການລົງທຶນ ໃນບໍລິສັດ ຮ່ວມທຶນ ແລະ ບໍລິສັດຮ່ວມທຸລະກິດ		1.279.641	1.439.306	1.279.641	1.439.306
ກຳໄລກ່ອນຕົ້ນທຶນການເງິນ		**140.606**	**3.267.528**	**132.176**	**3.235.600**
ຕົ້ນທຶນການເງິນ	23	(1.233.223)	(1.049.068)	(1.233.207)	(1.045.382)
(ຂາດທຶນ)/ກຳໄລ ກ່ອນອາກອນ		**(1.092.617)**	**2.218.460**	**(1.101.031)**	**2.190.218**
ລາຍຈ່າຍອາກອນກຳໄລ	24	(1.119)	(80.447)	-	(80.447)
(ຂາດທຶນ)/ກຳໄລ ພາຍໃນປີ		**(1.093.736)**	**2.138.013**	**(1.101.031)**	**2.109.771**
(ຂາດທຶນ)/ກຳໄລ ທີ່ເປັນຂອງ:					
ບໍລິສັດທີ່ຄວບຄຸມໂດຍບໍລິສັດແມ່		(1.096.381)	2.138.428	(1.101.031)	2.109.771
ບໍລິສັດທີ່ບໍ່ໄດ້ຄວບຄຸມໂດຍບໍລິສັດແມ່		2.645	(415)	-	-
		(1.093.736)	**2.138.013**	**(1.101.031)**	**2.109.771**
ກຳໄລຕໍ່ຮຸ້ນ					
ກຳໄລ/(ຂາດທຶນ) ພື້ນຖານຕໍ່ຮຸ້ນ (ກີບ)	25	(653)	1.273,63	(656)	1.256,56

ທ່ານ ວິງສະກຸນ ຍິ່ງຍິ່ງ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຜູ້ອຳນວຍການຝ່າຍການເງິນ

01 ເມສາ 2024

ໃບລາຍງານສ່ວນປ່ຽນແປງຂອງທຶນແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ແບບສັງລວມ							
	ບໍລິສັດທີ່ຄວບຄຸມໂດຍບໍລິສັດແມ່							
	ຮຸ້ນທຶນຈົດທະບຽນ	*ສ່ວນເພີ່ມມູນຄ່າຮຸ້ນ*	*ຄັງສຳຮອງຕາມລະບຽບການ*	*ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່*	*ກຳໄລສະສົມ*	*ລວມ*	*ບໍລິສັດທີ່ບໍ່ໄດ້ຄວບຄຸມໂດຍ ບໍລິສັດແມ່*	*ລວມທຶນ*
	ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2022	**6.717.215**	**985.621**	**565.708**	**134.944**	**823.602**	**9.227.090**	**3.504**	**9.230.594**
ຂາດທຶນຈາກການສູນເສຍການຄວບຄຸມໃນບໍລິສັດໃນເຄືອ	-	-	-	-	-	-	(7.738)	(7.738)
ກຳໄລພາຍໃນປີ	-	-	-	-	2.138.428	2.138.428	(415)	2.138.013
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່	-	-	-	308.664	-	308.664	-	308.664
ການຈ່າຍເງິນປັນຜົນ	-	-	-	-	(83.965)	(83.965)	-	(83.965)
ສ່ວນເພີ່ມເງິນສຳຮອງຕາມລະບຽບການ	-	-	210.977	-	(210.977)	-	-	-
ຍອດເຫຼືອນະວັນທີ 31 ທັນວາ 2022	**6.717.215**	**985.621**	**776.685**	**443.608**	**2.667.088**	**11.590.217**	**(4.649)**	**11.585.568**
ຂາດທຶນພາຍໃນປີ	-	-	-	-	(1.096.381)	(1.096.381)	2.645	(1.093.736)
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່	-	-	-	25.380	-	25.380	-	25.380
ຈ່າຍເງິນປັນຜົນ	-	-	-	-	(83.967)	(83.967)	-	(83.967)
ອາກອນເງິນປັນຜົນ	-	-	-	-	(1.041)	(1.041)	-	(1.041)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	1.913		(1.913)	-	-	-
ຍອດເຫຼືອນະວັນທີ 31 ທັນວາ 2023	**6.717.215**	**985.621**	**778.598**	**468.988**	**1.483.786**	**10.434.208**	**(2.004)**	**10.432.204**

ໃບລາຍງານສ່ວນປ່ຽນແປງຂອງທຶນແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ແບບແຍກກິດຈະການ					
	ຮຸ້ນທຶນຈົດທະບຽນ ລ້ານກີບ	*ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ*	*ຄັງສຳຮອງຕາມລະບຽບການ ລ້ານກີບ*	*ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່ ລ້ານກີບ*	*ກຳໄລສະສົມ ລ້ານກີບ*	*ລວມ ລ້ານກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2022	**6.717.215**	**985.621**	**565.708**	**134.944**	**866.804**	**9.270.292**
ກຳໄລພາຍໃນປີ	-	-	-	-	2.109.771	2.109.771
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່	-	-	-	308.664	-	308.664
ຈ່າຍເງິນປັນຜົນ	-	-	-	-	(83.965)	(83.965)
ສ່ວນເພີ່ມເງິນສຳຮອງຕາມລະບຽບການ	-	-	210.977	-	(210.977)	-
ຍອດເຫຼືອນະວັນທີ 31 ທັນວາ 2022	**6.717.215**	**985.621**	**776.685**	**443.608**	**2.681.633**	**11.604.762**
ຂາດທຶນພາຍໃນປີ	-	-	-	-	(1.101.031)	(1.101.031)
ສ່ວນເພີ່ມຈາກການຕີມູນຄ່າຄືນໃໝ່	-	-	-	25.380	-	25.380
ຈ່າຍເງິນປັນຜົນ	-	-	-	-	(83.967)	(83.967)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	-	-	-	-
ຍອດເຫຼືອນະວັນທີ 31 ທັນວາ 2023	**6.717.215**	**985.621**	**776.685**	**468.988**	**1.496.635**	**10.445.144**

ທ່ານ ວິງສະກຸນ ຍິ່ງຍິ່ງ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຜູ້ອຳນວຍການຝ່າຍການເງິນ

01 ເມສາ 2024

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

	ຍົກ ອະທິບາຍ	ແບບສັງລວມ		ແບບແຍກກິດຈະການ	
		31 ທັນວາ 2023 ລ້ານກີບ	*31 ທັນວາ 2022 ລ້ານກີບ*	*31 ທັນວາ 2023 ລ້ານກີບ*	*31 ທັນວາ 2022 ລ້ານກີບ*
ກິດຈະກຳການດຳເນີນງານ					
ກຳໄລ/(ຂາດທຶນ) ກ່ອນອາກອນ		**(1.093.736)**	**2.218.460**	**(1.101.031)**	**2.190.218**
ດັດແກ້ສຳລັບ:					
ຄ່າໜ້ຽຫ້ຽນ	6	572.767	540.227	572.086	536.514
ຄ່າເສື່ອມສຳລັບຕົ້ນທຶນການອອກຮຸ້ນກູ້		76.385	34.481	76.385	34.481
(ກຳໄລ)/ຂາດທຶນຈາກການສະສາງຊັບສິນພາຍໃຕ້ ສຳປະທານ		544	7.526	544	7.526
ກຳໄລຈາກການສູນເສຍອຳນາດຄວບຄຸມໃນ ບໍລິສັດໃນເຄືອ ຫຼື ບໍລິສັດຮ່ວມທຸລະກິດ		-	(31.377)	-	-
ກຳໄລຈາກການສະສາງເງິນລົງທຶນໃນ ບໍລິສັດຮ່ວມທຸລະກິດ ແລະ ບໍລິສັດຮ່ວມທຶນ		(368.920)	-	(368.920)	-
ລາຍຮັບອື່ນໆ		(87.873)	(3.946.813)	(35.986)	(3.946.813)
ລາຍຮັບດອກເບ້ຍ - ຈາກພາກສ່ວນທີ່ກ່ຽວຂ້ອງ		(6.071)	(9.543)	(6.071)	(9.543)
ລາຍຈ່າຍການເງິນ	23	1.233.223	1.049.068	1.233.207	1.045.382
ລາຍຈ່າຍອາກອນກຳໄລ		1.119	80.447	-	80.447
ກຳໄລໃນຮຸ້ນຈາກການລົງທຶນ	4	(1.279.641)	(1.439.306)	(1.279.641)	(1.439.306)
ກຳໄລຈາກກິດຈະກຳການດຳເນີນງານກ່ອນການປ່ຽນແປງທຶນ ໝຸນວຽນ		**(952.203)**	**(1.496.830)**	**(909.427)**	**(1.501.094)**
ດັດແກ້ສຳລັບການປ່ຽນແປງໃນເງິນລົງທຶນໝຸນວຽນ:					
ຊັບສິນໝຸນວຽນອື່ນໆ		1.226.848	2.954.815	1.145.536	2.946.089
ຊັບສິນບໍ່ໝຸນວຽນອື່ນໆ		(5.406)	25.143	(5.406)	25.143
ລາຍຈ່າຍລ່ວງໜ້າ		27.128	-	31.928	-
ໜີ້ຕ້ອງຮັບການຄ້າ		(1.065.049)	(890.919)	(1.050.937)	(895.574)
ໜີ້ຕ້ອງສົ່ງການຄ້າ		315.092	(22.845)	339.287	39.753
ເຄື່ອງໃນສາງ		(1.213)	2.189	(1.213)	2.189
ລາຍຈ່າຍດອກເບ້ຍ		(24.383)	(122.574)	(30.052)	(126.842)
ໜີ້ສິນໝຸນວຽນອື່ນໆ		(16.881)	82	(14.004)	82
ເງິນສົດທີ່ໃຊ້ ໃນກິດຈະກຳການດຳເນີນງານ		**(494.067)**	**449.061**	**(494.288)**	**489.746**
ຈ່າຍດອກເບ້ຍ		(1.196.408)	(765.460)	(1.196.408)	(761.774)
ກະແສເງິນສົດສຸດທິຈາກກິດຈະກຳ ການດຳເນີນງານ		**(1.692.475)**	**(316.399)**	**(1.690.696)**	**(272.028)**
ກິດຈະກຳຈາກການລົງທຶນ					
ເງິນລົງທຶນໃນ ບໍລິສັດຮ່ວມທຶນ ແລະ ບໍລິສັດຮ່ວມທຸລະກິດ		(9.403)	(7.673)	(9.403)	(7.673)
ລາຍຈ່າຍການຊື້ຊັບສິນພາຍໃຕ້ສັນຍາສຳປະທານ		380.429	(57.660)	380.220	(53.770)
ການຊື້ຊັບສິນບັດຄົງທີ່		(522)	(45)	(521)	(40)
ຮັບເງິນສົດຈາກການສະສາງ ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ		544	34.811	544	-
ຮັບເງິນສົດຈາກການສະສາງເງິນລົງທຶນໃນ ບໍລິສັດຮ່ວມທຶນ ແລະ ບໍລິສັດຮ່ວມທຸລະກິດ		1.745.412	-	1.745.412	-
ເງິນສົດຕ້ອງຮັບຈາກການສະສາງຂອງບໍລິສັດໃນເຄືອ		-	(25.760)	-	-
ຮັບເງິນປັນຜົນຈາກເງິນລົງທຶນໃນ ບໍລິສັດ ຮ່ວມທຶນ ແລະ ບໍລິສັດຮ່ວມທຸລະກິດ		260.272	467.993	260.272	467.993
ກະແສເງິນສົດສຸດທິໃຊ້ໃນກິດຈະກຳການລົງທຶນ		**2.376.732**	**411.666**	**2.376.524**	**406.510**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບລາຍງານກະແສເງິນສົດແບບສັງລວມ ແລະ ແບບແຍກກິດຈະການ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023

		ແບບສັງລວມ		ແບບແຍກກິດຈະການ	
	ຍົກ ອະທິບາຍ	*31 ທັນວາ 2023*	*31 ທັນວາ 2022*	*31 ທັນວາ 2023*	*31 ທັນວາ 2022*
		ລ້ານກີບ	*ລ້ານກີບ*	*ລ້ານກີບ*	*ລ້ານກີບ*
ລາຍຈ່າຍເງິນປັນຜົນ		(41.143)	(83.965)	(41.143)	(83.965)
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ		2.502.753	330.866	2.502.753	330.866
ຊຳລະເງິນກູ້ຢືມໄລຍະສັ້ນ		(1.232.749)	(296.059)	(1.232.749)	(296.059)
ຮັບເງິນສົດຈາກການກູ້ຢືມໄລຍະຍາວ		72.597	-	72.597	-
ຊຳລະເງິນກູ້ຢືມໄລຍະຍາວ		(104.820)	(45.055)	(104.820)	(45.055)
ຮັບເງິນສົດຈາກການອອກຮຸ້ນກູ້		2.176.726	391.527	2.176.726	391.527
ຊຳລະຮຸ້ນກູ້		(3.218.542)	(451.253)	(3.218.542)	(451.253)
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ		**154.822**	**(153.939)**	**154.822**	**(153.939)**
ເງິນສົດ ແລະ ທຽບເທົ່າເງິນສົດສຸດທິເພີ່ມຂຶ້ນ		**839.080**	**(58.672)**	**840.651**	**(19.457)**
ເງິນສົດໃນຕົ້ນປີ		**220.311**	**202.585**	**217.779**	**161.702**
ຜົນກະທົບຈາກການໜັງຕີງອັດຕາແລກປ່ຽນ		**-**	**76.398**	**-**	**75.534**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍປີ		**1.059.391**	**220.311**	**1.058.430**	**217.779**

ທ່ານ ວົງສະກຸນ ຍິ່ງຍົງ
ຜູ້ອຳນວຍການໃຫຍ່

ທ່ານ ຄຳໃບ ຫຼວງໄຊ
ຜູ້ອຳນວຍການຝ່າຍການເງິນ

01 ເມສາ 2024

ຊີວະປະຫວັດຫຍໍ້ ຂອງ ຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່

ຊີວະປະຫວັດຫຍໍ້ ຂອງ ທ່ານ ປອ ບຸນແທນ ຈັນສະໄໝ

ຊື່ ແລະ ນາມສະກຸນ: ທ່ານ ປອ ບຸນແທນ ຈັນສະໄໝ

ວັນ/ເດືອນ/ປີເກີດ: 09/06/1972

ອາຍຸ: 52 ປີ

ສັນຊາດ: ລາວ

ທີ່ຢູ່ປັດຈຸບັນ: ບ້ານ ໜອງວຽງຄຳ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ

ລະດັບວິຊາສະເພາະສູງສຸດ: ປະລິນຍາເອກ ສາຂາວິຊາ ວິສະວະກຳໄຟຟ້າ, ມະຫາວິທະຍາໄລສັບພະວິຊາຮ່າໂນ້ຍ ແຂວງ ຮ່າໂນ້ຍ, ປະເທດ ສສ ຫວຽດນາມ.

<u>ການເຝິກອົບຮົມ</u>:

24-26/02/1998	ຝຶກອົບຮົມວິຊາ "ການປັບຕັ້ງໝໍ້ນັບໄຟ" ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າ ລາວ, ນະຄອນຫຼວງວຽງຈັນ.
23 ກຸມພາ-06 ມີນາ 1998	ຝຶກອົບຮົມວິຊາ "ເຕັກນິກການຕິດຕັ້ງໄຟໃນອາຄານ ແລະ ອຸດສາຫະກຳ" ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
19-23/04/1999	ຝຶກອົບຮົມວິຊາ "ການຈັດສັນພະລັງງານ" ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າ ລາວ, ນະຄອນຫຼວງວຽງຈັນ.
29 ພຶດສະພາ-10 ມິຖຸນາ 2000	ຝຶກອົບຮົມວິຊາ "ການປັບຕັ້ງ ແລະ ທົດສອບໝໍ້ນັບໄຟ" ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
15 ກັນຍາ-10 ທັນວາ 2000	ຝຶກອົບຮົມວິຊາ "Basic Program Visual & C Plus" ຢູ່ ສູນຝຶກອົບຮົມ TPS, ນະຄອນຫຼວງວຽງຈັນ.
09 ກໍລະກົດ-07 ທັນວາ 2001	ຝຶກອົບຮົມວິຊາ "English for Lao Government Official" ຢູ່ ສະຖາບັນ ການຕ່າງປະເທດ, ກະຊວງການຕ່າງປະເທດ, ນະຄອນຫຼວງວຽງຈັນ.
03 ກັນຍາ-24 ຕຸລາ 2001	ຝຶກອົບຮົມວິຊາ "Business Course in Management Strategy" ຢູ່ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ.
22-26/04/2002	ຝຶກອົບຮົມວິຊາ "Demand Size Management (DSM)" ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
05-09/07/2004	ຝຶກອົບຮົມວິຊາ "Demand Size Management (DSM)" ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.

12-16 ຕຸລາ 2009	ຝຶກອົບຮົມວິຊາ “ການປັບປຸງຕົວປະກອບກຳລັງ (PF) ຂອງລູກຄ້າ ແລະ ລະບົບຈຳໜ່າຍ” ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
12-15/10/2010	ຝຶກອົບຮົມວິຊາ “Distribution Line Intermediate” ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
07-18/06/2011	ຝຶກອົບຮົມວິຊາ “ພາວະຜູ້ນຳ” ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
06-24/07/2020	ຝຶກອົບຮົມວິຊາ “ຍົກລະດັບຜູ້ບໍລິຫານຍຸກໃໝ່” ຢູ່ Katalyst Centre
27-28/06/2023	ຝຶກອົບຮົມວິຊາ “Board Leadership Program (2nd BLP)” ຢູ່ ສະຖາບັນທະນາຄານ ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

<u>ປະສົບການໃນການເຮັດວຽກ</u>:

1996-2006	ຫົວໜ້າພະແນກເຕັກນິກໄຟຟ້າ, ສາຂາຫົວພັນ, ລັດວິສາຫະກິດ ໄຟຟ້າລາວ
03/2008-03/2009	ຫົວໜ້າພະແນກຜະລິດບິນເກັບເງິນ, ສາຂາຫົວພັນ, ລັດວິສາຫະກິດ ໄຟຟ້າລາວ
03/2009-2013	ຮອງຫົວໜ້າສາຂາ, ສາຂາຫົວພັນ, ລັດວິສາຫະກິດ ໄຟຟ້າລາວ
02/2020-10/2020	ຮອງຫົວໜ້າຝ່າຍ, ຝ່າຍຄຸ້ມຄອງສາຍສົ່ງ ແລະ ສະຖານີ, ລັດວິສາຫະກິດ ໄຟຟ້າລາວ
10/2020-09/2021	ຮອງຜູ້ອຳນວຍການຝ່າຍພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
09/2021-11/2023	ຜູ້ອຳນວຍການຝ່າຍພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
01/2023 - ປະຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້າຫ້ວຍເຫາະ ຈຳກັດ
11/2023 - ປະຈຸບັນ	ຮອງຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
01/2024 - ປະຈຸບັນ	ປະທານສະພາບໍລິຫານ, ບໍລິສັດ ນ້ຳດີກ 1 ພາວເວີ ຈຳກັດ
01/2024 - ປະຈຸບັນ	ກຳມະການສະພາບໍລິຫານ ແລະ ຄະນະກຳມະການບໍລິຫານ, ບໍລິສັດ ເຫີນ-ຫີນບູນ ພາວເວີ ຈຳກັດ
01/2024 - ປະຈຸບັນ	ປະທານສະພາບໍລິຫານ, ບໍລິສັດ ນ້ຳບີ ພາວເວີ ຈຳກັດ

ຊີວະປະຫວັດຫຍໍ້ ຂອງ ທ່ານ ດາວວຽງ ສຸນັນທະລາດ

ຊື່ ແລະ ນາມສະກຸນ:	ທ່ານ ດາວວຽງ ສຸນັນທະລາດ
ວັນ/ເດືອນ/ປີເກີດ:	03/05/1972
ອາຍຸ:	52 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ເມືອງນ້ອຍ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ ສາຂາວິຊາ ວິສະວະກຳພະລັງງານ, ມະຫາວິທະຍາໄລຊຽງໃໝ່, ຈັງຫວັດ ຊຽງໃໝ່, ປະເທດ ໄທ.

<u>ການເຝິກອົບຮົມ</u>:

08-20/08/1994	ຝຶກອົບຮົມວິຊາ “ພະນັກງານຍາມໄຟສະຖານີ” ຢູ່ສູນຝຶກອົບຮົມລັດວິສາຫະກິດໄຟຟ້າລາວ, ນະຄອນຫຼວງວຽງຈັນ.
12-16/09/2005	ຝຶກອົບຮົມວິຊາ “VHDL and FPGA Digital Circuit Design” ຢູ່ ສູ ນຝຶກ ອົບຮົມ ຄະນະວິສະວະກຳສາດ ມະຫາວິທະຍາໄລແຫ່ງຊາດ, ນະຄອນຫຼວງວຽງຈັນ.
17-21/12/2007	ຝຶກອົບຮົມວິຊາ “Work shop on Web Data Base Design and Application” ຢູ່ສູນຝຶກອົບຮົມ EGAT ເຂື່ອນສີລິກິດ, ຈັງຫວັດ ອຸດຕະລະດິດ, ປະເທດ ໄທ.
16-20/06/2008	ຝຶກອົບຮົມວິຊາ “ມາດຕະຖານເຕັກນິກໄຟຟ້າລາວ ລະດັບ 1 ຂະແໜງໂຮງໄຟຟ້າພະລັງນ້ຳ” ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
06-21/09/2008	ຝຶກອົບຮົມວິຊາ “ການບໍລິຫານຈັດການນ້ຳໃນອ່າງນ້ຳງື່ມ 1 ໂດຍໃຊ້ໂປຼແກຼມ PARSIFAL” ຢູ່ສູນຝຶກອົບຮົມ EDF, ເມືອງ ກິນນອບເບີ, ແຂວງ ລີຢົງ, ປະເທດ ຝຣັ່ງ.
12-16/01/2009	ຝຶກອົບຮົມວິຊາ “ໄຟຟ້າເອເລັກໂຕຣນິກ” ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
23-27/11/2009	ຝຶກອົບຮົມວິຊາ “ມາດຕະຖານເຕັກນິກໄຟຟ້າລາວ ລະດັບ 2 ຂະແໜງໂຮງໄຟຟ້າພະລັງນ້ຳ” ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
05-06/2010	ຝຶກອົບຮົມວິຊາ “Hydro power and the Environment HE210” ຢູ ສູ ນຝຶກ ອົບຮົມICH, ເມືອງ ໂທລນແຮມ, ປະເທດ ນໍເວ.
02-04/2012	ຝຶກອົບຮົມວິຊາ “ພາສາອັງກິດ” ໃນໂຄງການຮ່ວມມື EDL-EGAT-CMU, ຢູ່ສູນ ພາສາມະຫາວິທະຍາໄລຊຽງໃໝ່, ຈັງຫວັດ ຊຽງໃໝ່, ປະເທດ ໄທ
12-15/11/2013	ຝຶກອົບຮົມວິຊາ “ຄວບຄຸມລະບົບໄຟຟ້າ ໂຄງການ LDC” ຢູ່ສູນຝຶກອົບຮົມລັດວິສາຫະ ກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
15 -20/11/2013	ຝຶກອົບຮົມວິຊາ “ການຄວບຄຸມລະບົບໄຟຟ້າ ໂຄງການ LDC” ຢູ່ EGAT ສູນຄວບຄຸມ ໄຟຟ້າພາກຕາເວັນອອກສຽງເໜືອ, ຈັງຫວັດຂອນແກ່ນ, ປະເທດ ໄທ.

02-05/2014	ຝຶກອົບຮົມວິຊາ "Model of Energy Supply System Alternatives and Their General Environmental Impact (MASSAGE)" ຈຳນວນ 10 ຄັ້ງ ຢູ່ ກົມນະໂຍບາຍ, ກະຊວງພະລັງງານ-ບໍ່ແຮ່ ໂດຍ Mr. Amin Gauss ຊ່ຽວຊານເຢຍລະ ມັນ ແລະ Mr. Manfred Strubegger ຊ່ຽວຊານອິສເຕຍ ບໍລິສັດ Fichtner.
16-19/06/2014	ຝຶກອົບຮົມວິຊາ "Sub-basin Reservoir Simulation Modelling and Development of Hydro power Decision Support Planning Tools in Lao PDR" ຈຳນວນ 2 ຄັ້ງ ຢູ່ກົມນະໂຍບາຍ, ກະຊວງພະລັງງານ-ບໍ່ແຮ່ ໂດຍ Mr. Edurdo, Mr. Manuel and Mr. Alfredo ຊ່ຽວຊານປະເທດສະເປນ, ທຶນຊ່ວຍເຫຼືອ ຈາກທະນາຄານໂລກ.
29-30 /09/2015	ຝຶກອົບຮົມວິຊາ "ທັກສະໃນການເປັນຜູ້ນຳ ແລະ ການສ້າງທີມງານ" ຢູ່ຫ້ອງປະຊຸມຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ ໂດຍຄູຝຶກຈາກສະຖາ ບັນຄົ້ນຄ້ວາວິທະຍາສາດການປົກຄອງ ແລະ ຝຶກອົບຮົມ ກະຊວງພາຍໃນ.
26-27/06/2017	ຝຶກອົບຮົມວິຊາ "Internal Audit Training for Updating ISO 14001.2015 EMS of Nam Ngum 1" ຢູ່ເຂື່ອນໄຟຟ້ານ້ຳງື່ມ 1, ແຂວງວຽງຈັນ ໂດຍ Mr. HO Yoon Sin ຊ່ຽວຊານປະເທດມາເລເຊຍ.
06-07/07/2017	ຝຶກອົບຮົມຫົວຂໍ້ "Analysis of Hydroelectric Project Feasibility Study (FS)" ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ ບັນຍາຍໂດຍ ວິຊາການບໍລິສັດ ລາຊລາວ.
09-15/09/2018	ຝຶກອົບຮົມຫົວຂໍ້ "Capacity Building on IWRM Master Plan for Nam Ngum River Basin in Lao PDR" ຢູ່ K-Water Center, ປະເທດ ສ. ເກົາຫຼີ ໂດຍຜູ້ບັນຍາຍຈາກບໍລິສັດ K-Water.
20-21/11/2018	ສຳມະນາ ໃນຫົວຂໍ້ "Renewable Energy" ຢູ່ ໂຮງແຮມ Marriott Hotel, ເມືອງ Kualalumpur, ປະເທດ Malaysia ຈັດໂດຍ The International Renewable Energy Agency (IRENA).
27-30/03/2019	ຝຶກອົບຮົມຫົວຂໍ້ "Power Projects in Lao PDR" ຢູ ໂຮງແຮມ Avani Hotel ຈັງຫວັດ ຂອນແກ່ນ, ປະເທດ ໄທ ໂດຍຜູ້ບັນຍາຍຈາກວິຊາການບໍລິສັດ LS Horizon Limited.
23-27/11/2020	ຝຶກອົບຮົມວິຊາການບັນຊີ ໃນຫົວຂໍ້ "ເຜີຍແຜ່ຮູບແບບເອກະສານລາຍງານການເງິນ ການ ບັນຊີ ວິສາຫະກິດລະບົບປັບປຸງ ປີ 2020" ຢູ່ສຳນັກງານໃຫຍ່ ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ, ນະຄອນຫຼວງວຽງຈັນ ໂດຍວິທະຍາກອນຈາກກົມ ບັນຊີກະຊວງການເງິນ.
03-05/10/2022	ຝຶກອົບຮົມໃນຫົວຂໍ້ "ກະກຽມສັນຍາ ແລະ ປະເມີນການບໍລິການວຽກ O&M ໃຫ້ກັບ ລູ ກ ຄ້ າ Hydro power O&M Contract Management and O&M Cost Estimate" ຢູ່ສູນຝຶກອົບຮົມລັດວິສາຫະກິດ ໄຟຟ້າລາວ, ນະຄອນຫຼວງວຽງຈັນ.
02-03/03/2023	ຝຶກອົບຮົມໃນຫົວຂໍ້ "Risk Management Workshop" ແລະ "Non-Finance

ປະສົບການໃນການເຮັດວຽກ:

2010 - 2015	ຫົວໜ້າພະແນກຜະລິດ-ຄວບຄຸມ, ເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
03/2014 - 2016	ຮອງຫົວໜ້າໂຄງການເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ ຈັກເບີ 7-8, ແລະ ຫົວໜ້າພະແນກຜະລິດ-ຄວບຄຸມ, ເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
06/2016 - 06/2020	ຮອງຜູ້ອຳນວຍການເຂື່ອນໄຟຟ້ານ້ຳງື່ມ 1, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
06/2020 - 09/2011	ວ່າການຜູ້ອຳນວຍການຝ່າຍພັດທະນາທຸລະກິດ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
09/2011 - 08/2022	ຜູ້ອຳນວຍການຝ່າຍແຜນການ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
08/2022 - 11/2023	ຜູ້ອຳນວຍການຝ່າຍເຕັກນິກ, ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ
09/2022 - ປະຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້າ ນ້ຳງື່ມ 5 ຈຳກັດ
07/2023 - ປະຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ນ້ຳດີກ 1 ພາວເວີ ຈຳກັດ
11/2023 - ປະຈຸບັນ	ຮອງຜູ້ອຳນວຍການໃຫຍ່, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
12/2023 - ປະຈຸບັນ	ປະທານສະພາບໍລິຫານ, ບໍລິສັດ ອີແອນອີ ເອັນຈີເນຍຣິ່ງ ແອນເຊີວິດສ ຈຳກັດ
12/2023 - ປະຈຸບັນ	ປະທານສະພາບໍລິຫານ, ບໍລິສັດ ບໍລິການ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ
01/2024 - ປະຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້າ ນ້ຳລີກ 1 ຈຳກັດ
01/2024 - ປະຈຸບັນ	ປະທານສະພາບໍລິຫານ, ບໍລິສັດ ຫ້ວຍລຳພັນ ພາວເວີ ຈຳກັດ
01/2024 - ປະຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້າໄຊຍະບູລີ ຈຳກັດ

ຊີວະປະຫວັດຫຍໍ້ ຂອງ ຄະນະສະພາບໍລິຫານຜູ້ໃໝ່

ຊີວະປະຫວັດຫຍໍ້ ຂອງ ທ່ານ ວົງສະກຸນ ຍິ່ງຍົງ

ຊື່ ແລະ ນາມສະກຸນ:	ທ່ານ ວົງສະກຸນ ຍິ່ງຍົງ
ວັນ/ເດືອນ/ປີເກີດ:	05/10/1964
ອາຍຸ:	60 ປີ
ສັນຊາດ:	ລາວ
ທີ່ຢູ່ປັດຈຸບັນ:	ບ້ານ ນາເລົ່າ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	ປະລິນຍາໂທ ສາຂາວິຊາ ກົງຫັນພະລັງນ້ຳ ແລະ ລະບົບບັງຄັບ, ມະຫາວິທະຍາໄລກໍ່ສ້າງເຄື່ອງຈັກ, ອະດີດສະຫະພາບໂຊຫວຽດ

ການເຝິກອົບຮົມ:

1991-1993	ວິຊາສ້ອມແປງ ແລະ ບຳລຸງຮັກສາກົງຫັນພະລັງນ້ຳ ທີ່ໂຮງຮຽນມະຫາວິທະຍາໄລກໍ່ສ້າງເຄື່ອງຈັກ, ອະດີດສະຫະພາບໂຊຫວຽດ
1995	ວິຊາສ້ອມແປງປ້ຳນ້ຳ, ປ້ຳລົມ, ວາວປະຕູນ້ຳ ແລະ ທໍ່, ວິຊາປັບຄວາມທ່ຽງຂອງເພົາເຄື່ອງໄຟຟ້າ ແລະ ເຄື່ອງຈັກປັ່ນໄຟ, ວິຊາລູກຫວ່ານ ແລະ ລະບົບລໍ່ລື່ນ (ເຄື່ອງຈັກ) ທີ່ ມະຫາວິທະຍາໄລ IKATAM, ປະເທດມາເລເຊຍ
2001	ການຈັດການເສດຖະກິດຕະຫຼາດ ຂອງສະຖາບັນ Price Water HouseCoppers
2001	ການຈັດການບັນຊີ ຂອງສະຖາບັນ Managing Hydropower
2007	Small Scale and Clean Energy Power (Solar and Wine Power) ທີ່ TEPCO JAPAN
2023	ຄວາມຮູ້ພື້ນຖານກ່ຽວກັບວຽກງານຜິທີການທູດ, ມາລະຍາດໃນສັງຄົມ ແລະ ມາລະຍາດສາກົນ, ສປປ ລາວ

ປະສົບການໃນການເຮັດວຽກ:

1993-1999	ຫົວໜ້າພະແນກກົນຈັກ, ພະແນກກໍ່ສ້າງ ແລະ ຫົວໜ້າພະແນກຈັດຕັ້ງບໍລິຫານ ເຂື່ອນໄຟຟ້າແຊລະບົ, ລັດວິສາຫະກິດໄຟຟ້າລາວ
1999-2010	ຫົວໜ້າເຂື່ອນໄຟຟ້າແຊລະບົ, ລັດວິສາຫະກິດໄຟຟ້າລາວ
10/03-18/06/2010	ຮອງຫົວໜ້າເຂື່ອນໄຟຟ້າເຊເສັດ 1-2, ລັດວິສາຫະກິດໄຟຟ້າລາວ
2010-2011	ຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່, ລັດວິສາຫະກິດໄຟຟ້າລາວ
2011-2013	ຮອງຫົວໜ້າຝ່າຍກໍ່ສ້າງເຂື່ອນ ແລະ ຄຸ້ມຄອງໂຄງການຮ່ວມທຶນ, ລັດວິສາຫະກິດໄຟຟ້າລາວ
2013-2017	ຮອງຫົວໜ້າຝ່າຍກໍ່ສ້າງເຂື່ອນ, ທັງເປັນຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 3, ລັດວິສາຫະກິດໄຟຟ້າລາວ

08/2020 – 12/2023	ຄະນະກຳມະການສະພາບໍລິຫານ, ບໍລິສັດ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ
08/2020 - 09/2022	ຄະນະກຳມະການສະພາບໍລິຫານ, ບໍລິສັດ ອີດີແອ-ເຈັນ ໂຊລ່າ ພາວເວີ ຈຳກັດ
08/2020 - ປັດຈຸບັນ	ຄະນະກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້ານ້ຳງື່ມ 2 ຈຳກັດ
09/2020 - 09/2022	ຄະນະກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້ານ້ຳງຽບ 2 ຈຳກັດ
07/2020 - 08/2023	ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
06/2022 - 12/2023	ປະທານສະພາບໍລິຫານ, ບໍລິສັດ ບໍລິການ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟ ຟລ ຈຳກັດ
09/2022 - 04/2023	ປະທານສະພາບໍລິຫານ, ບໍລິສັດ ອີດີແອ-ເຈັນ ໂຊລ່າ ພາວເວີ ຈຳກັດ
09/2022 – 07/2023	ກຳມະການສະພາບໍລິຫານ, ບໍລິສັດ ນ້ຳພູນ ພາວເວີ ຈຳກັດ
09/2022 - ປັດຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້ານ້ຳທາ 1 ລາວ ຈຳກັດ
09/2022 - ປັດຈຸບັນ	ກຳມະການສະພາບໍລິຫານ, ໂຄງການເຂື່ອນໄຟຟ້ານ້ຳແບ່ງ
07/2023 – 01/2024	ປະທານສະພາບໍລິຫານ, ບໍລິສັດ ນ້ຳດີກ 1 ພາວເວີ ຈຳກັດ
07/2023 – ປັດຈຸບັນ	ປະທານສະພາບໍລິຫານ, ບໍລິສັດ ນ້ຳພູນ ພາວເວີ ຈຳກັດ
08/2023-ປັດຈຸບັນ	ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
01/2024 - ປັດຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ໄຟຟ້າພະລັງນ້ຳ ນ້ຳອູ ຈຳກັດ
01/2024 - ປັດຈຸບັນ	ກຳມະການສະພາບໍລິຫານ, ບໍລິສັດ ເຫີນ-ຫີນບູນ ພາວເວີ ຈຳກັດ
02/2024-ປັດຈຸບັນ	ຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ

ຊີວະປະຫວັດຫຍໍ້ຂອງ ທ່ານ ສົມພິດ ແກ້ວວິຈິດ

ຊື່ ແລະ ນາມສະກຸນ: ທ່ານ ສົມພິດ ແກ້ວວິຈິດ

ວັນ/ເດືອນ/ປີ/ເກີດ: 01/05/1968

ອາຍຸ: 56 ປີ

ສັນຊາດ: ລາວ

ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວາດໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: - ປະລິນຍາຕີສາຂາ ວິສະວະກຳກົນຈັກ ຢູ່ມະຫາວິທະຍາໄລແຫ່ງຊາດລາວ.

<u>ການເຝິກອົບຮົມ:</u>

08-11/1994	ພາສາອັງກິດລະດັບກາງຢູ່ສະຖານທູດອັງກິດ ປະຈຳວຽງຈັນ ຈັດໂດຍກະຊວງການຕ່າງປະເທດ
06-07/1996	ຄູຝຶກກ່ຽວກັບການສ້າງ ແລະ ສົ່ງເສີມຜູ້ປະກອບການທຸລະກິດໃໝ່ ຈັດໂດຍອົງການ GTZ
03-05/1997	ພາສາອັງກິດລະດັບສູງ, ສະຖາບັນອັງກິດ ປະຈຳວຽງຈັນພາຍໃຕ້ການຊ່ວຍເຫຼືອຂອງລັດຖະບານອັງກິດ
09-12/1997	ພາສາອັງກິດລະດັບກ້າວໜ້າຢູ່ສູນຝຶກອົບຮົມ SEAMEO ທີ່ປະເທດສິງກະໂປ
09/1999	ການຂຽນບົດສະເໜີໂຄງການພັດທະນາທີ່ຫົວຫີນ, ປະເທດໄທ
01/2000	Public Sector Reform ທີ່ສະຖາບັນແມ່ນ້ຳຂອງສາກົນ, ມະຫາວິທະຍາໄລຂອນແກ່ນ
03-04/2000	Office Automatic Utilization ທີ່ປະເທດອິນເດຍ
11/2001	ການພັດທະນາ ແລະ ການຄຸ້ມຄອງຊອບແວຄອມພິວເຕີ້, ນະຄອນຊຽງໄຮ້, ປະເທດ ສປ ຈີນ
10/2009	ການພັດທະນາ ແລະ ການຄຸ້ມຄອງພະລັງງານໄຟຟ້າໃນຕົວເມືອງທີ່ປະເທດ ສ.ເກົາຫຼີ
06-07/2010	ການສົ່ງເສີມການພັດທະນາພະລັງງານໄຟຟ້ານ້ຳຕົກ, ນະຄອນໂຕກຽວ, ປະເທດຍີ່ປຸ່ນ
08-09/2011	ການຮ່ວມມືພາກລັດ ແລະ ເອກະຊົນເພື່ອພັດທະນາພື້ນຖານໂຄ່ງລ່າງ, ປະເທດຝຣັ່ງ
09/2013	Power Purchase Agreement, ປະເທດສິງກະໂປ
10/2017	Leadership: Leading for Change Management, ບອດສຕັນ, ສະຫະລັດອາເມລິກາ

<u>ປະສົບການເຮັດວຽກ:</u>

10/1993-1997	ວິຊາການພະແນກສະຖິຕິ-ແຜນການ ແລະ ສັງລວມ, ຫ້ອງການກະຊວງອຸດສາຫະກຳແລະ ຫັດຖະກຳ
1997	ເລຂາລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ຫັດຖະກຳ
04/2000	ຮອງຫົວໜ້າພະແນກຄຸ້ມຄອງບໍລິຫານ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ
10/2004	ຫົວໜ້າພະແນກເລຂານຸການ ແລະ ພິທີການ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ
08/2006	ເລຂາລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ
03/2007	ຫົວໜ້າພະແນກເລຂານຸການ ແລະ ພິທີການ, ກະຊວງອຸດສາຫະກຳ ແລະ ການຄ້າ
07/2010	ຮອງຫົວໜ້າພະແນກພັດທະນາ ແລະ ຕິດຕາມໂຄງການ, ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
02/2012	ຫົວໜ້າພະແນກພັດທະນາ ແລະ ຕິດຕາມໂຄງການ, ກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2013-2018	ຮອງຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2019-ປັດຈຸບັນ	ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່
2020-ປັດຈຸບັນ	ກຳມະການສະພາບໍລິຫານ ບໍລິສັດ ພະລຶດ-ໄຟຟ້າລາວ ມະຫາຊົນ

❖ ປັດຈຸບັນເປັນສະພາບໍລິຫານ 01 ບໍລິສັດຄື: 1) ລັດວິສາຫະກິດຖືຮຸ້ນລາວ.

ຊີວະປະຫວັດຫຍໍ້ຂອງ ທ່ານ ຊົນລະວິດ ວິນິດໄສ

ຊື່ ແລະ ນາມສະກຸນ:	ທ່ານ ຊົນລະວິດ ວິນິດໄສ
ວັນ/ເດືອນ/ປີເກີດ:	12/03/1978
ອາຍຸ:	46 ປີ
ທີ່ຢູ່ປັດຈຸບັນ:	ບ້ານ ໜອງດ້ວງເໜືອ, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ
ລະດັບວິຊາສະເພາະສູງສຸດ:	Master of Scien (Banking and Finance) and (English Program) Master of Engineering (Electrical Engineering)
ດ້ານພາສາຕ່າງປະເທດ:	ພາສາອັງກິດ ແລະ ພາສາໄທ

ປະສົບການເຮັດວຽກ:

2011-2015	RATCH Australia Corporation
2018-ປັດຈຸບັນ	Chief Executive officer, Fareast Renewable Development Pte. Ltd
2019-ປັດຈຸບັນ	Board of Director, Yandin WF Holding Pty Ltd., Yandin WF Pty Ltd and Asia Water Sole Co., Ltd
2021-ປັດຈຸບັນ	Board of Director, RATCH Lao Services Co., Ltd Board of Director, Siphandone – RATCH Lao Co., Ltd Board of Director, Bangkok Chain International (Laos) Co., Ltd Board of Director, Fareast Renewable Development Pte, Ltd
2022-ປັດຈຸບັນ	Board of Director, Hongsa Power Co., Ltd and Phufai Mining Company Limited Managing Director of Ratch-Lao Service Co., Ltd Managing Director of Asia Water Company Limited CEO of Foreast Renewable Development

ຊີວະປະຫວັດຫຍໍ້ຂອງ ທ່ານ ຄຳມູນ ວິພິງໄຊ

ຊື່ ແລະ ນາມສະກຸນ: ທ່ານ ຄຳມູນ ວິພິງໄຊ

ວັນ/ເດືອນ/ປີເກີດ: 13/02/1958

ອາຍຸ: 66 ປີ

ທີ່ຢູ່ປັດຈຸບັນ: ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາ ກົດໝາຍ ແລະ ການບໍລິຫານພາກລັດ

ດ້ານພາສາຕ່າງປະເທດ: ພາສາອັງກິດ ແລະ ພາສາຣັງກາລີ

<u>ການເຝິກອົບຮົມ:</u>

03-07/2020	ສະຖາບັນຝຶກອົບຮົມການບັນຊີ, Creative Accounting Academy, ທີ່ ບາງກອກ, ປະເທດໄທ

ປະສົບການເຮັດວຽກ:

1986-1990	ເປັນພະນັກງານຊ່ວຍວຽກຢູ່ກົມກົງຈັກ, ສຳນັກຄະນະຈັດຕັ້ງສູນກາງພັກ, ສຳນັກງານຄະນະຈັດຕັ້ງສູນກາງພັກ ຫຼັກ 6
1990-1992	ຮອງຫົວໜ້າກົມກົງຈັກ, ຄະນະຈັດຕັ້ງສູນກາງພັກ
1992-1996	ຫົວໜ້າກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສຳນັກງານນາຍົກລັດຖະມົນຕີ
1996-1998	ຜູ້ຮັກສາການຫົວໜ້າກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ຫ້ອງການສຳນັກງານນາຍົກລັດຖະມົນຕີ
2001-2005	ຫົວໜ້າກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ເລຂາໜ່ວຍພັກ, ກົມການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສຳນັກງານນາຍົກລັດຖະມົນຕີ
2006-2011	ຮອງຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ຫ້ອງການສຳນັກງານນາຍົກລັດຖະມົນຕີ
2011-2021	ຮອງລັດຖະມົນຕີ, ກະຊວງພາຍໃນ
2013-2021	ຄະນະກຳມະການຄຸ້ມຄອງຫຼັກຊັບ
2021-ປັດຈຸບັນ	ກຳມະການສະພາບໍລິຫານອິດສະຫຼະ ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ

ຊີວະປະຫວັດຫຍໍ້ຂອງ ທ່ານ ຄຳແກ້ວ ວິສີສົມບັດ

ຊື່ ແລະ ນາມສະກຸນ: ທ່ານ ຄຳແກ້ວ ວິສີສົມບັດ

ວັນ/ເດືອນ/ປີ/ເກີດ: 29/12/1975

ອາຍຸ: 49

ສັນຊາດ: ລາວ

ທີ່ຢູ່ປັດຈຸບັນ: ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: ປະລິນຍາໂທ ສາຂາ ເສດຖະສາດ, ປະເທດອິດສະຕາລີ.

ປະສົບການເຮັດວຽກ:

04/1998-2007	ວິຊາການຢູ່ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
2007-2009	ຮອງຫົວໜ້າພະແນກສະຖິຕິ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
2009-2010	ຮັກສາການຫົວໜ້າພະແນກສະຖິຕິ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ
05/2010-2011	ຫົວໜ້າພະແນກສະຖິຕິ, ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.
04-07/2011	ເລຂາທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ.
07/2011-2016	ເລຂາທ່ານຜູ້ວ່າການ ທະນາຄານແຫ່ງ ສປປ ລາວ
06/2014-2016	ຮອງຫົວໜ້າຫ້ອງການ, ທະນາຄານແຫ່ງ ສປປ ລາວ
07/2016-2017	ຮອງຫົວໜ້າຄະນະກຳມະການຄຸ້ມຄອງຫຼັກຊັບ
02/2017-2019	ຮອງຜູ້ອຳນວຍການໃຫຍ່ ທະນາຄານສົ່ງເສີມກະສິກຳ
2019-ປັດຈຸບັນ	ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ
	ກຳມະການສະພາບໍລິຫານອິດສະຫຼະ ບໍລິສັດ ເຜ ລິດ-ໄຟຟ້າລາວ ມະຫາຊົນ

❖ ປັດຈຸບັນເປັນສະພາບໍລິຫານ 01 ບໍລິສັດຄື: 1) ກຳມະການສະພາບໍລິຫານກອງທຶນ SME ກະຊວງອຸດສາຫະກຳ ແລະ ການຄ້າ

ຊີວະປະຫວັດຫຍໍ້ຂອງ ທ່ານ ປອ. ພັນປະກິດ ອ່ອນພັນດາລາ

ຊື່ ແລະ ນາມສະກຸນ: ທ່ານ ປອ. ພັນປະກິດ ອ່ອນພັນດາລາ

ວັນ/ເດືອນ/ປີເກີດ: 22/08/1979

ອາຍຸ: 45 ປີ

ທີ່ຢູ່ປັດຈຸບັນ: ບ້ານ ຫ້ວຍຫົ່ງ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ

ລະດັບວິຊາສະເພາະສູງສຸດ: ປະລິນຍາເອກ ສາຂາ ເສດຖະສາດ

ດ້ານພາສາຕ່າງປະເທດ: ພາສາອັງກິດ, ພາສາຍີ່ປຸ່ນ ແລະ ພາສາໄທ

ປະສົບການເຮັດວຽກ:

2008-2011	ຜູ້ຊ່ວຍສາດສະດາຈານ, Graduate School of International Cooperation Studies, Kobe University, Japan
2011-2015	ຫົວໜ້າພະແນກການສຶກສາຫຼັງປະລິນຍາຕີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ
2015-2019	ຮອງຜູ້ອຳນວຍການ ສະຖາບັນພັດທະນາຊັບພະຍາກອນມະນຸດລາວ-ຍີ່ປຸ່ນ, ມະຫາວິທະຍາໄລແຫ່ງຊາດ
2019-2020	ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍພັດທະນາວິສາຫະກິດ ແລະ ການເຊື່ອມໂຍງສາກົນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ
2020-2022	ຮອງຫົວໜ້າກົມຄົ້ນຄວ້າສັງລວມ, ຫ້ອງວ່າການສູນກາງພັກ
2020-ປັດຈຸບັນ	ກຳມະການສະພາບໍລິຫານອິດສະຫຼະ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ໃບມອບສັນທະ
PROXY

ຂຽນທີ່ .....
Written at

ວັນທີ ..... ເດືອນ ..... ປີ .....
Date Month Year

(1) ຂ້າພະເຈົ້າ ..... ສັນຊາດ ..... ວັນທີ, ເດືອນ ແລະ ປີເກີດ .....
I/We Nationality date, month and year of birth

ບັດປະຈຳຕົວເລກທີ ..... ຢູ່ເຮືອນເລກທີ ..... ບ້ານ ..... ຖະໜົນ .....
ID card number Reside at Village Road

ເມືອງ ..... ແຂວງ .....
District Province

(2) ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ເອເລັດ-ໄຟຟ້າລາວ ມະຫາຊົນ.
Being a shareholder of EDL-Generation Public Company.

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ ..... ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding the ordinary shares in the total amount of shares, which are equivalent to the same number of votes.

(3) ຂໍມອບໝາຍໃຫ້ (ກະລຸນາລະບຸ ຫຼື ເລືອກຜູ້ຕາງໜ້າ ພຽງແຕ່ 1 ທ່ານ)
Hereby appoint (Please specify or select only 1 person to be your proxy)

(1) ☐ ທ່ານ/ທ່ານນາງ ..... ອາຍຸ ..... ປີ,ຢູ່ເຮືອນເລກທີ .....
Mr./Ms. age years, reside at

ຖະໜົນ ..... ບ້ານ ..... ເມືອງ .....
Road Village District

ແຂວງ ..... ລະຫັດໄປສະນີ ..... ຫຼື
Province Postal Code or

(2) ☐ ທ່ານ ຄຳມຸນ ວິພົງໄຊ ..... ອາຍຸ 66 ປີ, ຢູ່ເຮືອນເລກທີ 390
Mr. Khammoune VIPHONGXAY age 66 years, resides at 390

ຖະໜົນ ..... ບ້ານ .....ໂພນສະຫວ່າງ ..... ເມືອງ ..... ຈັນທະບູລີ
Road Village Phonsavang District Chanthabouly

ແຂວງ ..... ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 ..... ຫຼື
Province Postal Code 2392 or

(3) ☐ ທ່ານ ຄຳແກ້ວ ວິສີສົມບັດ ..... ອາຍຸ 49 ປີ,ຢູ່ເຮືອນເລກທີ 015
Mr. Khamkeo VISISOMBATH age 49 years, resides at 015

ຖະໜົນ ..... ບ້ານ.....ໂພນໄຊ ..... ເມືອງ ..... ໄຊເສດຖາ
Road Village Phonxay District Xaysettha

ແຂວງ.....ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 ..... ຫຼື
Province Postal Code 2392 or

(4) ☐ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ..... ອາຍຸ 45 ປີ, ຢູ່ເຮືອນເລກທີ.....593.....
Dr. Phanpakit ONPHANDALA age 45 years, resides at 593

ຖະໜົນ ..... ບ້ານ ..... ຫ້ວຍຫົ່ງ ..... ເມືອງ ..... ຈັນທະບູລີ
Road Village Houayhong District Chanthabouly

ແຂວງ ..... ນະຄອນຫຼວງວຽງຈັນ ..... ລະຫັດໄປສະນີ 2392 .....
Vientiane Capital Postal Code 2392

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ 26 ເມສາ 2024 ເວລາ 15:00 ໂມງ.

Any one of them to be my/our proxy to attend and vote on my/our behalf at the Annual General Meeting for the Year 2023 to be held on 26 April 2024 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງ ວຽງຈັນ ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarters building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ; (ຖ້າເລືອກທາງເລືອກນີ້ ທ່ານບໍ່ຈຳເປັນຕ້ອງໝາຍ ເຫັນດີ ຫຼື ບໍ່ເຫັນດີ ໃນທຸກວາລະຂ້າງລຸ່ມ)

To grant my/our proxy to consider and vote on my/our behalf as he/she may deem appropriate in all respect (If you choose this option, you do not need to tick Approve or Disapprove for every Agenda item below);

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ; (ກະລຸນາ ໝາຍໃສ່ຊ່ອງ ☐ ເຫັນດີ ຫຼື ບໍ່ເຫັນດີ ສະເພາະໃນວາລະທີ່ທ່ານຕ້ອງການລົງຄະແນນສຽງ)

To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects (please specify your vote by ticking on ☐ Approve or ☐ Disapprove only for agenda items for which you intend to cast your votes)

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.(ຖ້າເລືອກທາງເລືອກນີ້ ທ່ານຈຳເປັນຕ້ອງໝາຍ ເຫັນດີ ຫຼື ບໍ່ເຫັນດີ ໃນທຸກວາລະຂ້າງລຸ່ມ)

To grant my/our proxy to vote as per my/our intention. (If you choose this option, you need to tick Approve or Disapprove for every Agenda item below);

ວາລະທີ 1: **ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນ ປະຈຳປີຜ່ານມາ.**

Agenda No. 1 **To report on the implementation results of the resolutions of the previous Annual General Meeting of Shareholders.**

ວາລະທີ 2: **ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 2 ປະຈຳປີ 2023.**

Agenda No. 2 **To consider and adopt the Minutes of the Extraordinary General Meeting of Shareholders No.2/2023.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 3: **ພິຈາລະນາ ແລະ ອະນຸມັດເອົາລາຍງານການເງິນ 6 ເດືອນຕົ້ນປີ 2023 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2023.**

Agenda No. 3 **To consider and approve the Company's financial statements for the first six-month period of 2023 and no dividend payment from the business performance of the first six-month of 2023.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 4: **ພິຈາລະນາ ແລະ ອະນຸມັດຍົກລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2023 ລວມທັງລາຍງານການເງິນຂອງບໍລິສັດ ປີ 2023.**

Agenda No. 4 **To consider and approve the Company's business performance report for 2023 including the Company's financial statements for the year 2023.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 5: **ພິຈາລະນາ ແລະ ອະນຸມັດແຜນການດຳເນີນທຸລະກິດຂອງບໍລິສັດ ປີ 2024.**

Agenda No. 5 **To consider and approve the Company's 2024 business plan.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 6: **ພິຈາລະນາ ແລະ ອະນຸມັດ ເລື່ອງເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2023.**

Agenda No. 6 **To consider and approve the dividend matter from the 2023 business performance.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 7: **ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ຄະນະຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອປ່ຽນແທນຄະນະຜູ້ອຳນວຍການໃຫຍ່ຜູ້ເກົ່າທີ່ໄດ້ໄປຮັບໜ້າທີ່ໃໝ່ ແລະ ພ້ອມການຮັບອຸດໜູນບຳເນັດ.**

Agenda No. 7 **To consider and adopt the appointment of new members of the managing directors team to replace former members who was assigned to a new position, retired and resigned.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 8: **ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານ ເພື່ອປ່ຽນແທນຜູ້ທີ່ຄົບອາຍຸການ.**

Agenda No. 8 **To consider and adopt the appointment of Vice Chairman and Directors to replace those who have completed their term of office.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

ວາລະທີ 9: **ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.**

Agenda No. 9 **To consider and adopt the amendments to the Articles of Association of the Company in Article 9: Directors and Article 12: Board of Directors.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັ້ນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.....)

ລົງລາຍເຊັ້ນ/Signed ຜູ້ຕາງໜ້າ/Proxy

(.....)

ໝາຍເຫດ

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະບໍ່ສາມາດແບ່ງແຍກຈຳ ນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

   The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 24/ສພຊ, ລົງວັນທີ 29 ທັນວາ 2022, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນຳໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

   Pursuant to the Law on Notary (Amended) No. 24/NA, dated 29 December 2022, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2023 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນຈັດຂຶ້ນເປັນ 2 ລະບົບ ຄື: ຜູ້ຖືຮຸ້ນສາມາດເຂົ້າຮ່ວມຜ່ານລະບົບອອນລາຍ ຜ່ານລະບົບ AGM: https://agm-egm.edlgen.com.la/user/login ແລະ ສາມາດເຂົ້າຮ່ວມແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 1 ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ. ເຊິ່ງຜູ້ຖືຮຸ້ນຕ້ອງປະຕິບັດຕາມແຕ່ລະກໍລະນີດັ່ງລຸ່ມນີ້:

- ຊື່ອີເມວ ຂອງບໍລິສັດ ຜ-ຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

I. <u>ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ AGM</u>

ຜູ້ຖືຮຸ້ນ ທີ່ຈະມາເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍໄດ້ ແມ່ນຜູ້ທີ່ໄດ້ຮັບການຕອບຮັບຢືນຢັນການເຂົ້າຮ່ວມຈາກບໍລິສັດເທົ່ານັ້ນ ເຊິ່ງຕ້ອງແຈ້ງຈຸດປະສົງເຂົ້າຮ່ວມປະຊຸມທາງອອນລາຍຜ່ານລະບົບ AGM ທີ່ບໍລິສັດໄດ້ແຈ້ງລາຍລະອຽດຜ່ານອີເມວ, ເລີ່ມລົງທະບຽນປະຊຸມທາງອອນລາຍເລີ່ມແຕ່ວັນທີ່ແຈ້ງອີເມວ ເຖິງພາຍໃນ ວັນທີ 24 ເມສາ 2024.

1. ເອກະສານທີ່ຕ້ອງກະກຽມໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ AGM ໃນແຕ່ລະຮູບແບບ ມີດັ່ງນີ້:

1) ສຳລັບຜູ້ຖືຮຸ້ນທີ່ມາດ້ວຍຕົນເອງ ທີ່ມີຈຸດປະສົງແຈ້ງເຂົ້າປະຊຸມແບບຊ້ອງໜ້າ, ໃນກໍລະນີນີ້ ຜູ້ຖືຮຸ້ນບໍ່ຈຳເປັນຕ້ອງນຳສິ່ງເອກະສານ ອີເລັກໂທຣນິກໃດໆ ເຂົ້າສູ່ລະບົບ AGM.

2) ສຳລັບຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າ:

2.1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).

2.2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.

- ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງໜ້າລັກສະນະ 2.1 ແລະ 2.2 ຜູ້ຖືຮຸ້ນຈະຕ້ອງທຳການສະແກນເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຖືຮຸ້ນເອງ ເພື່ອຢືນຢັນຕົວຕົນ, ເອກະສານໃບມອບສັນທະ, ເອກະສານສຳຄັນຕ່າງໆ ໂດຍເອກະສານທັງໝົດຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ) ເພື່ອນຳເຂົ້າສູ່ລະບົບ AGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.
- ນອກຈາກນີ້ຜູ້ຖືຮຸ້ນຈະຕ້ອງລົງທະບຽນໃຫ້ຜູ້ຕາງໜ້າ (ຜູ້ຕາງໜ້າທົ່ວໄປທີ່ບໍ່ແມ່ນກຳມະການ ອິດສະຫຼະ) ໂດຍທຳການອັບໂຫຼດເອກະສານບັດປະຈຳຕົວ/ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ຂອງຜູ້ຕາງໜ້າ ເພື່ອຢືນຢັນຕົວຕົນ. ໂດຍຕ້ອງເປັນຟາຍ ນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ AGM ເພື່ອໃຫ້ເຈົ້າໜ້າທີ່ທຳການລົງຄະແນນສຽງໃຫ້ສຳເລັດ.

3) ສຳລັບຜູ້ຖືຮຸ້ນເຂົ້າຮ່ວມແບບອອນລາຍດ້ວຍຕົນເອງຈະຕ້ອງໄດ້ ອັບໂຫລດເອກະສານບັດປະຈຳຕົວ /ໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ເປັນຟາຍນາມສະກຸນ JPG, JPEG ເພື່ອນຳເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນເທົ່ານັ້ນ, ສຳລັບກໍລະນີນີ້ຜູ້ຖືຮຸ້ນສາມາດລົງຄະແນນສຽງແບບອອນລາຍໄດ້.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມທາງອອນລາຍໄດ້. ເຊິ່ງເອກະສານທີ່ຕ້ອງ ຄັດຕິດສົ່ງເຂົ້າມາໃນລະບົບມີດັ່ງນີ້:</u>

1. ການລົງທະບຽນ ເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ AGM.

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ຂອງ ບໍລິສັດ ເອເລັກ-ໄຟຟ້າລາວ ມະຫາຊົນ ທາງອອນລາຍ ນັບແຕ່ມື້ສົ່ງແຈ້ງເຊີນຜ່ານອີເມວຂອງຜູ້ຖືຮຸ້ນ ເຖິງວັນທີ 24/04/2024 ໂດຍຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມທາງອອນລາຍຕ້ອງແຈ້ງຈຸດປະສົງເຂົ້າຮ່ວມ ຜ່ານລະບົບ AGM ຄື: https://agm-egm.edlgen.com.la/user/login, ລາຍລະອຽດຕ່າງໆແມ່ນແນບຜ່ານອີເມວ ເຊິ່ງຜູ້ຖືຮຸ້ນຈະໄດ້ຮັບຂໍ້ມູນດັ່ງນີ້:

1) ລິ້ງທີ່ຢູ່ເວັບໄຊສຳລັບການເຂົ້າສູ່ລະບົບ AGM ເພື່ອລົງທະບຽນ ແລະ ລົງຄະແນນສຽງ.
2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບເຂົ້າສູ່ລະບົບ AGM.

   ພາຍຫຼັງ ກົດລິ້ງ https://agm-egm.edlgen.com.la/user/login ເຂົ້າສູ່ລະບົບຄັ້ງທຳອິດ ຜູ້ຖືຮຸ້ນຈຳເປັນຕ້ອງໄດ້ກົດ "ລືມລະຫັດຜ່ານ" ເພື່ອດຳເນີນຕັ້ງຄ່າ ລະຫັດຜ່ານໃຫມ່ ໂດຍທີ່ ລະບົບຈະສົ່ງຂໍ້ຄວາມໄປທີ່ອີເມວ ຂອງທ່ານທັນທີ.
3) ເມື່ອເຂົ້າສູ່ລະບົບ ການຕອບຮັບເຂົ້າຮ່ວມປະຊຸມ ຈະມີ 3 ທາງເລືອກເຊັ່ນ:
   3.1. "ຕ້ອງການເຂົ້າຮ່ວມປະຊຸມ ມາດ້ວຍຕົນເອງ (Individual)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແຕ່ເຂົ້າຮ່ວມງານປະຊຸມຊ້ອງໜ້າ.
   3.2. "ຕ້ອງການເຂົ້າຮ່ວມກອງປະຊຸມ ໂດຍການມອບສັນທະ (Proxy)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ມອບສັນທະ, ເຊິ່ງມີລາຍລະອຽດດັ່ງນີ້:
   - ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ ເທົ່ານັ້ນ).
   - ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.
   3.3. "ຕ້ອງການເຂົ້າຮ່ວມປະຊຸມ ດ້ວຍຕົນເອງ ແບບອອນລາຍ" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ເຂົ້າຮ່ວມງານປະຊຸມຜ່ານທາງ Microsoft Team ແລະ ໂຫວດຄະແນນສຽງຜ່ານລະບົບ AGM.

2. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຈະຕ້ອງສຳເນົາ ເພື່ອນຳເຂົ້າລະບົບ AGM ເພື່ອໃຊ້ໃນການຢັ້ງຢືນຕົວຕົນ ໃນການເຂົ້າຮ່ວມກອງປະຊຸມອອນລາຍ

- ເອກະສານທີ່ໃຊ້ເພື່ອຢັ້ງຢືນຕົວຕົນເຊັ່ນ: ບັດປະຈຳຕົວ, ບັດໜັງສືຜ່ານແດນ(ສຳລັບຄົນຕ່າງປະເທດ) ແລະ ເອກະສານອື່ນໆທີ່ກ່ຽວກັບເອກະສານຢັ້ງຢືນຕົວຕົນ ຕ້ອງເປັນຟາຍຮູບພາບ ນາມສະກຸນ JPG ຫຼື JPEG.
- ເອກະສານໃບມອບສັນທະ ແລະ ເອກະສານສຳຄັນຕ່າງໆ ຕ້ອງເປັນຟາຍນາມສະກຸນ PDF.

2.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

2.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມອອນລາຍດ້ວຍຕົນເອງ

(1) ໃຫ້ສຳເນົາເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ, ໃນກໍລະນີດັ່ງກ່າວ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ອີເມວກໍ່ໄດ້.

2.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ສຳເນົາເອກະສານ ດັ່ງລຸ່ມນີ້ :

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ. ຕົວແທນຕ້ອງສຳເນົາເອກະສານໃນຮູບແບບຟາຍ PDF.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 2.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍໃນຮູບແບບຟາຍ PDF.

- **ເອກະສານ 2 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ສຳເນົາເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(4) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2 ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ

2.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ອັບໂຫລດເອກະສານໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ),ໃຫ້ສຳເນົາເອກະສານ ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນ.

(3) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ ໃຫ້ສຳເນົາເອກະສານເປັນຟາຍດຽວ ເພື່ອສົ່ງເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ AGM.

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ AGM ເພື່ອຢືນຢັນຕົວຕົນ.

(3) ສະແກນເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 2.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF).

- **ເອກະສານ 3 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ອັບໂຫຼດເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(5) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ AGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 2.2.1 ຫຼື 2.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

3. ການມອບໝາຍເອກະສານ.

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

3.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

- ໃຫ້ສະແກນເອກະສານ ໃບມອບສັນທະ ໃນຮູບແບບຟາຍ (PDF) ເພື່ອສົ່ງເຂົ້າລະບົບ AGM ພາຍໃນວັນທີ 24 ເມສາ 2024 ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

4. ການແຈ້ງຕອບ ຈາກລະບົບ AGM ແລະ ຮັບລິ້ງປະຊຸມອອນລາຍຜ່ານ Microsoft Teams.

- ກໍລະນີ ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງ ຜົນສະຖານະ ແລະ ແຈ້ງລິ້ງເຂົ້າຮ່ວມປະຊຸມຜ່ານ Microsoft Teams ໃນລະບົບບັນຊີຜູ້ໃຊ້ງານ AGM.

- ກໍລະນີ ບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງຜ່ານອີເມວຂອງຜູ້ຖືຮຸ້ນ ແລະ/ຫຼື ອີເມວຂອງຜູ້ຕາງໜ້າ.
- ອີເມວເຈົ້າໜ້າທີ່ລົງທະບຽນຈະສົ່ງຫາຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງດຳເນີນການດ້ານເອກະສານໃຫ້ສຳເລັດ ຕາມໄລຍະເວລາທີ່ກຳນົດ, ອີເມວສຳລັບການແຈ້ງກໍລະນີເອກະສານບໍ່ຜ່ານການອະນຸມັດ ຊື່ທີ່ຢູ່ອີເມວ: agm-egm@edlgen.com.la ສຳລັບຜູ້ຖືຮຸ້ນລົງທະບຽນເຂົ້າຮ່ວມດ້ວຍໂຕເອງແບບອອນລາຍ, ແລະ proxy-register@edlgen.com.la ສຳລັບການລົງທະບຽນແບບແຕ່ງຕັ້ງມອບໝາຍຜູ້ຕາງໜ້າເຂົ້າປະຊຸມແທນ.

5. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ AGM.

5.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ເມື່ອຜູ້ຖືຮຸ້ນເຂົ້າສູ່ລະບົບເພື່ອລົງຄະແນນສຽງ ພາຍໃນລະບົບ ຈະມີ 2 ທາງເລືອກ ເພື່ອກົດລົງຄະແນນສຽງ ເຫັນດີ ຫຼື ບໍ່ເຫັນດີ, ຜູ້ຖືຮຸ້ນຈະເຫັນ ແລະ ສາມາດກົດເຂົ້າສູ່ວາລະ ເພື່ອລົງຄະແນນສຽງໄດ້ ກໍຕໍ່ເມື່ອ ວາລະນັ້ນເປີດໃຫ້ລົງຄະແນນສຽງຢູ່.

5.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມຜ່ານທາງອອນລາຍ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼື ບໍ່, ກຳນົດເວລາບໍ່ເກີນ 2 ນາທີ ໃນການລົງຄະແນນສຽງ, ຜູ້ທີ່ເຫັນດີຕ້ອງກົດເລືອກ ເຫັນດີ 

ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກົດເລືອກ ບໍ່ເຫັນດີ 

ໃນໜ້າຕ່າງການລົງຄະແນນ ເພື່ອລະບົບຈະນຳໄປກວດນັບສະຫຼຸບຄະແນນສຽງ,

<u>ຍົກເວັ້ນ:</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ແລະ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ) ຈະບໍ່ສາມາດລົງຄະແນນສຽງແບບອອນລາຍໄດ້, ເນື່ອງຈາກ ເຈົ້າໜ້າທີ່ຮັບຜິດຊອບລົງຄະແນນສຽງ ໄດ້ທຳການລົງຄະແນນສຽງ ແລະ ບັນທຶກຄະແນນສຽງດັ່ງກ່າວຕາມທີ່ຕົວແທນໄດ້ນຳສົ່ງຝ່າຍເອກະສານມອບສັນທະ ເຂົ້າສູ່ລະບົບ AGM ກ່ອນໜ້ານີ້ແລ້ວ.

5.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນສຽງ.</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ, ບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດໃນແຕ່ລະວາລະ, ຜູ້ຖືຮຸ້ນສາມາດຮັບຊົມການສະຫຼຸບ ແລະ ແຈ້ງຄະແນນສຽງຜ່ານກອງປະຊຸມອອນລາຍ ຜ່ານໂປຣແກຼມ Microsoft Teams.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

II. <u>ສຳລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບຊ້ອງໜ້າ</u>

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ຂອງບໍລິສັດ ເຫ ລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານຳໜັງສືເຊີນປະຊຸມ, ໃບ ແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າ ຮ່ວມກອງປະຊຸມໄດ້.</u>

1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າ ຮ່ວມກອງປະຊຸມ

1.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ
ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກ ຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງ ລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການ ປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງ ໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານ ແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 <u>ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ</u>

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງ ເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນ ຫຼັກຖານປະກອບພ້ອມ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບ ບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີ ອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາ ຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກິດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້1.2.1(1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳ ລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ພາຍໃນວັນທີ **26 ເມສາ 2024** ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ (14:00 ໂມງ) ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

3. ການລົງທະບຽນ

ບໍລິສັດຈະເລີ້ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ຂອງ ບໍລິສັດ ເຜ ລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 01 ຊົ່ວໂມງ 30 ນາທີ ຫຼື ຕັ້ງແຕ່ເວລາ 13:30-15:00 ໂມງ ເປັນຕົ້ນໄປ ໃນວັນທີ **26 ເມສາ 2024** ທີ່ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ຄັດຕິດມາພ້ອມນີ້.

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ້ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະ ຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດ.

4. ການລົງຄະແນນສຽງໃນກອງປະຊຸມສາມັນຜູ້ຖືຮຸ້ນ

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສຳຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, <u>**ຍົກເວັ້ນ**</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມ ໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກາເຄື່ອງໝາຍ (✓) ລົງໃນຊ່ອງ □ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, <u>ຍົກເວັ້ນ</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ້ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.

ຂັ້ນຕອນເຂົ້າລະບົບກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2023 ຜ່ານລະບົບອອນລາຍ

ຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າປະຊຸມຜ່ານລະບົບອອນລາຍ ສາມາດປະຕິບັດຕາມຂັ້ນຕອນດັ່ງນີ້:

1. ບໍລິສັດ ຈະສົ່ງ E-mail ແຈ້ງເຊີນປະຊຸມ ແລະ ລາຍລະອຽດການເຂົ້າຮ່ວມປະຊຸມ ໄປຫາຜູ້ຖືຮຸ້ນປະກອບມີ:
   1) ລິ້ງສຳລັບເຂົ້າສູ່ລະບົບ AGM ເພື່ອລົງທະບຽນກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງຜ່ານອອນລາຍ.
   2) ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສຳລັບເຂົ້າສູ່ລະບົບ AGM.
   3) File ບັດເຊີນທີ່ຄັດຕິດເພື່ອເປັນຂໍ້ມູນ.
      - ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

2. ສຳລັບຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍ ລະບົບລົງທະບຽນອອນລາຍ ຈະເປີດໃຫ້ດຳເນີນການ **ຕັ້ງແຕ່ວັນທີຜູ້ຖືຮຸ້ນໄດ້ຮັບບັດເຊີນ ໂດຍລະບົບຈະປິດຮັບ ການລົງທະບຽນອອນລາຍ ໃນວັນທີ 24/04/2024 ເວລາ 17:00 ໂມງ.**
3. ທ່ານສາມາດ ສະແກນ QR Code ແລະ ນຳໃຊ້ Short link ເພື່ອດາວໂຫລດຄູ່ມືການຕິດຕັ້ງ ໂປຣແກຣມ Microsoft Team ແລະ ຂັ້ນຕອນການໃຊ້ງານລະບົບ ກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2023 ຜ່ານລະບົບອອນລາຍ AGM ເພື່ອສຶກສາກ່ຽວກັບລະບົບ ແລະ ປະຕິບັດຕາມແຕ່ລະຂັ້ນຕອນ.

Short link = shorturl.at/cmY07

<u>ໝາຍເຫດ:</u>

1. ຜູ້ຖືຮຸ້ນຕ້ອງນຳເອົາ ຂໍ້ມູນເລກບັດປະຈຳຕົວ ຫຼື ເລກໜັງສືຜ່ານແດນ (ສຳລັບຄົນຕ່າງປະເທດ) ທີ່ໄດ້ຮັບຈາກ E-mail ເພື່ອໃຊ້ເປັນ ຊື່ຜູ້ໃຊ້ງານ ເຂົ້າສູ່ລະບົບ AGM, ເພື່ອແຈ້ງຈຸດປະສົງການເຂົ້າຮ່ວມຜ່ານອອນລາຍ, ເມື່ອເອກະສານຢັ້ງຢືນຕົວຕົນ ແລະ ເອກະສານສຳຄັນຕ່າງໆຂອງຜູ້ຖືຮຸ້ນ ຜ່ານການອະນຸມັດໃນຂັ້ນຕອນນີ້ຈະນັບເປັນອົງປະຊຸມໃຫ້ (ຖ້າຫາກຜູ້ຖືຮຸ້ນບໍ່ດຳເນີນການລົງທະບຽນ/ຢືນຢັນຕົວຕົນໃຫ້ສຳເລັດ, ກໍລະນີທີ່ເອກະສານບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ ການເຂົ້າຮ່ວມກອງປະຊຸມ ລະບົບຈະບໍ່ນັບເປັນອົງປະຊຸມ ແລະ ບໍ່ສາມາດໂຫວດຄະແນນຜ່ານອອນລາຍໄດ້ ລວມເຖິງຈະບໍ່ສາມາດຮັບຊິມການຖ່າຍທອດສົດຂອງກອງປະຊຸມໄດ້), ກໍລະນີເຂົ້າຮ່ວມໂຫວດອອນລາຍ ຖ້າຫາກຜູ້ຖືຮຸ້ນກົດປຸ່ມ “ອອກຈາກການປະຊຸມ ຫຼື ອອກຈາກລະບົບໂຫວດຄະແນນສຽງ” ລະຫວ່າງການດຳເນີນກອງປະຊຸມ ລະບົບຈະຕັດຄະແນນສຽງ ອອກຈາກອົງປະຊຸມ.
2. ຜູ້ຖືຮຸ້ນຕ້ອງມີ E-mail ເພື່ອຮັບຂໍ້ມູນແຈ້ງເຊີນເຂົ້າຮ່ວມລົງທະບຽນກອງປະຊຸມສາມັນຜູ້ຖືຮຸ້ນ ຜ-ຟຟລ ປະຈຳປີ 2023 ຜ່ານລະບົບອອນລາຍ.
3. ຂໍ້ມູນທີ່ປະກອບໃນລະບົບຕ້ອງກົງກັບຂໍ້ມູນ ໃນວັນ Record Date ຈາກຕະຫຼາດຫຼັກຊັບລາວ.
4. ກໍລະນີພົບບັນຫາໃນການໃຊ້ງານລະບົບປະຊຸມຜູ້ຖືຮຸ້ນຜ່ານລະບົບອອນລາຍ ຂອງ ຜ-ຟຟລ ສາມາດຕິດຕໍ່ໄດ້ທີ່ ເບີ ໂທ: 020 2221 0404, 020 5884 8144 (ໃຫ້ບໍລິການຈົນເຖິງ ວັນທີ 26 ເມສາ 2024 ເວລາ 8:30 - 17:00 ໂມງ).

<u>ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023</u>
Map of the Meeting Place



ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023

ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.

The Annual General Shareholder meeting for the year 2023, on 1st floor, Electricite du Laos heardquarter building.